**<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>**

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 7-10, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-10 Easter Lesson
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ຄຳແນະນຳສຳລັບຄຣູສອນ

## <u>ບົດຮຽນທີ 1</u>

## <u>ເວລາມີຄວາມທຸກທໍຣະມານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຂ ໂກຣິນໂທ 1:1-11

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** ຂ ໂກຣິນໂທ 1:1-11

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ປະສົບການຄວາມທຸກທໍຣະມານ ແມ່ນທາງ ເຮັດໃຫ້ພວກເຮົາລະນຶກເຖິງຄວາມສັດຊື່ທ່ຽງທັມຂອງພຣະເຈົ້າ ແລະກ້າວເຂົ້າສູ່ການຮັບໃຊ້ໃນການຊ່ວຍເຫລືອຜູ້ອື່ນ.

**<u>ຄຳຖາມເພື່ອສຳຣວດ</u>:** ເວລາຄວາມຫຍຸ້ງຍາກຫາກມາປະເຊີນຕໍ່ຊີວິດ, ພວກເຮົາຈະເຮັດແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອຈະສະລູບວ່າ ໂປໂລປະສົບກັບຄວາມທຸກໂສກທໍຣະມານ ແລະຈະໝູນໃຊ້ໃນຊີວິດຢ່າງໃດ?

## <u>ແຜນການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ:</u>

1. ເຮົາສາມາດເລີ້ມຕົ້ນດ້ວຍການວາງຄຳຖາມນັກຮຽນວ່າ ຜູ້ໃດເຄີຍມີປະສົບການໃນຄວາມທຸກທໍຣະມານ ໃຫ້ເຂົາແບ່ງປັນໃຫ້ຜູ້ອື່ນຮູ້ລອງເບິ່ງ. ອາດຈະມີຫລາຍຄົນກໍອາດເປັນໄດ້.

2. ອະທິບາຍວ່າມື້ນີ້ພວກເຮົາຈະໄດ້ມາສຶກສາເຖິງຄວາມທຸກທໍລະມານຂອງໂປໂລຊຶ່ງເປັນແບບຢ່າງທີ່ສຳຄັນໃນການປ່າວປະກາດ. ແລະແບບຢ່າງນີ້ມັນອາດສາມາດເປັນການຈັດຕຽມພວກເຮົາໃນການປ່າວປະກາດ ເວລາການປ່າວປະກາດ.

### <u>ນຳພາສຶກສາພຣະຄັມພີ</u>

3. ຄຣູຈະເລົ່າທວນຄືນໃນ ຂໂກຣິນໂທ ໂດຍໃຊ້ຄຳແນະນຳ. ຄຳທັກທາຍ. ໂດຍໃຫ້ເບິ່ງເຈົ້າບົດຮຽນ. ທ່ານອາດຈະວາງຄຳຖາມຢ່າງໃດຢ່າງນຶ່ງກໍໄດ້.

4. ຫລັງຈາກນັ້ນກໍໃຫ້ອ່ານ ຂ ໂກຣິນໂທ 1:1; ແລ້ວວາງຄຳຖາມວ່າ: ເປັນຫຍັງໂປໂລຈຶ່ງສເນີຕົວເອງວ່າເປັນອັຄສາວົກ? ແລ້ວໃຫ້ນັກຮຽນຟັງຄຳຕໍ່ໄປທີ່ລາວກຳລັງປ້ອງກັນຕົວເອງ (ຕາມນ້ຳພຣະທັຍຂອງພຣະເຈົ້າ ) ໃນຖານະທີ່ລາວເປັນຜູ້ນຳ, ແລະໂດຍສິດທິຂອງລາວ.

5. ອ່ານ ຂ ໂກຣິນໂທ 1:2-3 ໃຫ້ດັງໆ. ແມ່ນຫຍັງແດ່ທີ່ເປັນຂອງປະທານຈາກພຣະເຈົ້າຊຶ່ງກ່າວຢູ່ໃນຂໍ້ນີ້. ໃຫ້ອະທິບາຍໂດຍຫຍໍ້ງ ຄຳວ່າ "ພຣະຄຸນ" ແລະ "ສັນຕິສຸກ"

6. ກ່ອນຈະອ່ານ 2 ໂກຣິນໂທ 1:4-7, ໃຫ້ໜູນໃຈນັກຮຽນເຖິງການທົນທຸກທໍຣະມານແລະການຕຽມການ ປ່າວປະກາດ ທີ່ໂປໂລເລົ້າໂລມໃຈ:

- ພວກເຮົາຮັບເອົາພຣະເຈົ້າໃນຖານະເປັນຜູ້ເລົ້າໂລມ. (1:4)
- ຖ້າພວກເຮົາຫາກຮູ້ວ່າມີຄວາມທຸກທໍຣະມານ ເຮົາກໍມີສ່ວນຮ່ວມໃນການທົນທຸກຂອງອົງ ພຣະເຢຊູຄຣິດ. (1:5)
- ເມື່ອພວກເຮົາຫາກພົບກັບບັນຫາ, ພວກເຮົາກໍລະນຶກໄດ້ວ່າພຣະເຢຊູກຳລັງເພີ້ມພລັງ, ເພີ້ມເຣື່ອແຮງໃຫ້ກັບພວກເຮົາໃນການປ່າວປະກາດ. (1:6)
- ໃນຂະນະທີ່ພວກເຮົາກຳລັງປະກາດໃຫ້ກັບຜູ້ອື່ນຢູ່ນັ້ນກໍຄືເຮົາກຳລັງສ້າງພວກເຂົາໃຫ້ມີ ພລັງ ເໝືອນກັນ

7. ຄຣູອາດຈະປາທະກະຖາສັ້ນໆ ເຖິງບັນຫາການທົນທຸກທໍຣະມານຂອງໂປໂລຢູ່ໃນແຂວງ ອາເຊັຽ. (2 ໂກຣິນໂທ 1:8-10)

8. ຫາກໃນຄຣິສຕະຈັກຂອງທ່ານ ຫາກມີການອະທິຖານອ້ອນວອນກ່ຽວກັບບັນຫາຢ່າງນີ້ ກໍຈົ່ງຂຽນບັນ ຫາລົງໄປແລະກໍຈົ່ງອະທິຖານເພື່ອພວກເຂົາດ້ວຍ. (1:11)
ທ້າທາຍຫ້ອງຮຽນໃຫ້ໃຫ້ອະທິຖານ ແລະໃຫ້ຄວາມອຸດໜູນໃນການປ່າວປະກາດ.

<u>ຄຳໜູນໃຈສຳລັບວັນນີ້:</u>

9. ຂໍໃຫ້ນັກຮຽນທຸກຄົນມີບັນຊີຂອງໃຜລາວ, ຫລືຖ້ານັກຮຽນຫາກຂຽນ ຫລືອ່ານບໍ່ເປັນກໍໃຫ້ຄຣູ ເປັນຜູ້ເຮັດ ບັນຊີປະຈຳຫ້ອງ ແລ້ວກໍໃຫ້ນາອະທິຖານຮ່ວມກັນໃນແຕ່ລະອາທິດ.

10. ຖາມນັກຮຽນໃນຕອນສຸດທ້າຍວ່າ ເມື່ອເກີດບັນຫາຫລືມີຄວາມທຸກທໍຣະມານໃນການປະກາດທ່ານ ຈະແກ້ໄຂບັນຫາຢ່າງໃດ? ແລະຖ້າຫາກມີຜູ້ມາປຶກສາທ່ານໃນເວລາມີຄວາມທຸກທໍຣະມານໃນເວລາ ປ່າວປະກາດ ທ່ານຈະໃຫ້ຄຳແນະນຳແກ່ພວກເຂົາຢ່າງໃດ?

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ເມື່ອຄວາມສັມພັນຫາກບໍ່ທັມດາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 1:12--2:11

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 1:12--2:13

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຄວນມີຄວາມຮັບຜິດຊອບໃນການກະທຳຂອງຄຣິສຕຽນ ເມື່ອຄວາມສັມພັນຫາກມີການບໍ່ເປັນທັມດາ.

**ຄຳຖາມເພື່ອສຳຣວດ:** ຈະປະຕິບັດຢ່າງໃດເມື່ອຄວາມສັມພັນກັບຄົນອື່ນຫາກບໍ່ເປັນທັມດາ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊັ່ງຊາຕີລາຄາວ່າຈະຮັກສາສາຍສັມພັນຢ່າງໃດ ເມື່ອຄວາມສັມພັນຫາກບໍ່ເປັນທັມດາ?

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຖາມນັກຮຽນໃຫ້ແບ່ງປັນຍົກຕົວຢ່າງຂອງຄວາມຕຶງຄຽດຫລືຄວາມສັມພັນຫາກບໍ່ທັມດາ ທີ່ຜ່ານມາໃນຊີວິດຂອງພວກເຂົາເຈົ້າ ເຊັ່ນ: ຖືກໂຈມຕີຫາເຣື່ອງດ້ວຍຄວາມບໍ່ເປັນທັມ, ໂດຍໃຊ້ຄວາມບໍ່ເປັນຈິງ. ຖາມ: ຜົນສຸດທ້າຍແມ່ນລົງເອີ່ຍກັນດ້ວຍວິທີໃດ?

   ພວກເຮົາຈະມາສຶກສາໃນວັນນີ້ວ່າຈະແກ້ໄຂຄວາມຕຶງຄຽດຢ່າງໃດ ເພື່ອບໍ່ໃຫ້ເລວຮ້າຍລົງໄປ?

2. ຖາມ: ມັນເປັນຄວາມຊອບທັມຫລືບໍ່ ທີ່ເຮົາຈະປົກປ້ອງຕົວເອງຕໍ່ຄຳກ່າວຫາທີ່ບໍ່ເປັນຈິງ? ໂປໂລສຳເຣັດຜົນບໍ່ໃນການກະທຳເຊັ່ນນີ້? ຖ້າຢ່າງນັ້ນ ເຮົາມາເບິ່ງນຳກັນວ່າລາວເຮັດຢ່າງໃດ?
   ເປົ້າໝາຍຈຸດແຮກຂອງໂປໂລ ແມ່ນລາວພະຍາຍາມປ້ອງກັນການປ່າວປະກາດພຣະກິດຕິຄຸນ ແລະສນັບສນູນຄຣິສຕະຈັກ. ດ້ວຍເປົ້າໝາຍນີ້ລະ, ລາວຈຶ່ງບໍ່ໄດ້ຖືກກ່າວວ່າລາວປ້ອງກັນສິດສ່ວນຕົວ. ພວກເຮົາຈະລອກຮຽນແບບຂອງໂປໂລຢ່າງໃດ?

## ນຳພາການສຶກສາພຣະຄັມພີ

3. ອ່ານຂໍ້ພຣະຄັມພີ 1:12-14 ແລ້ວຖາມວ່າ ຂໍ້ກ່າວຫາທີ່ພວກເຂົາຈະຍົກຂຶ້ນມາຕໍ່ສູ້ກັບໂປໂລນັ້ນ ມີອັນໃດແດ່? (ໃຫ້ຊອກຫາ ສາມຢ່າງ)
   ໃນຂໍ້ 14 ການໂອ້ອວດຂອງລາວຢ່າງນັ້ນ ເປັນການສົມຄວນຫລືບໍ່? (ເພາະວ່າລາວແນະນຳຢາກໃຫ້ພຣະເຈົ້າມີສະງ່າລາສີ ແລະມີຄວາມຮັບຜິດຊອບໃນການປະກາດພຣະກິດຕິຄຸນ.)
4. ລາວແນ່ໃຈໃນແຜນທີ່ ທີ່ຊີ້ໃຫ້ເຫັນຈຸດໝາຍ (1:16). ນຳພານັກຮຽນໃຫ້ເຫັນເຫດຜົນວ່າເປັນຫຍັງໂປໂລຈຶ່ງງົດການແວ່ຢ້ຽມຢາມ (1:23)
   ຈົ່ງຕຽມຕົວເພື່ອແບ່ງປັນຂ່າວຄາວກ່ຽວກັບຈົດໝາຍຂອງໂປໂລ ທີ່ຂຽນໄປຫາຄຣິສຕະຈັກເມືອງໂກ

ຣິນໂທ ເພາະເນື້ອໃນໃຈຄວາມສ່ວນຫລາຍແລ້ວກໍແມ່ນເພື່ອຊ່ວຍໃຫ້ພວກເຂົາເຂົ້າໃຈ ແລະເຫັນຄວາມສັມພັນເປັນສ່ວນໃຫຍ່. "ໃນ 1:15-2:24 ທັງຫມົດນີ້ແມ່ນການປ້ອງກັນຕົວໃນການປ່ຽນແປງການຢ້ຽມຢາມ" ໃຫ້ອີກຄົນນຶ່ງ ອ່ານ 2:1-4 ເພື່ອຈະໄດ້ເຫັນເຖິງຄວາມກົດດັນຕ່າງໆ.

5. ໃຫ້ຂຽນລົງໃສ່ໃນກະດານ ວ່າລາວປ້ອງກັນການປ່າວປະກາດຢ່າງໃດ? (1:17-20)

- ແຜນການຂອງໂປໂລການນຳພາຈາກພຣະເຈົ້າ, ບໍ່ແມ່ນແນວຄິດຂອງລາວເອງ
- ຖ້ອຍຄຳຂອງລາວກໍແມ່ນອອກມາຈາກພຣະເຈົ້າ, ບໍ່ແມ່ນຖ້ອຍຄຳທີ່ບໍ່ແນ່ນອນທີ່ອອກມາຈາກມະນຸດ
- ພຣະເຢຊູຄຣິດເປັນຜູ້ທີ່ເຫັນພ້ອມກັບການປ່າວປະກາດ

6. ໃນເຈັ້ຽບົດຮຽນໄດ້ບອກເຖິງ 5 ວິທີທີ່ພຣະເຈົ້າທຳງານໃນການສາມັກຄີທັມທີ່ພົບໃນ 1:21-23. ຈົ່ງອ່ານແລະແບ່ງປັນຊຶ່ງກັນແລະກັນ.

7. ໃນ 1:24; 2:5-11 ໂປໂລໄດ້ສະແດງຄວາມເປັນຫ່ວງເປັນໃຍ ນຳການຊ່ວຍເຫລືອເກື້ອກູນໃນຄຣິສຕະຈັກ. ຫາກຖ້ອຍຄຳນີ້ອ່ານໄປຫມົດແລ້ວ, ໃຫ້ຫນູນນໃຈນັກຮຽນທຸກໆຄົນສົນທະນາ, ອອກຄວາມຄິດຄວາມເຫັນ. ໃຫ້ແນວຄິດລອງເບິ່ງວ່າ ການທີ່ໂປໂລກະທຳລົງໄປນັ້ນ ມີຜົນປໂຍດໃຫ້ແກ່ຄຣິສຕະຈັກຢ່າງໃດແດ່? ແລະໃຫ້ຜົນປໂຍດແກ່ການປ່າວປະກາດຢ່າງໃດແດ່?

## <u>ຄຳຫນູນໃຈສຳລັບວັນນີ້:</u>

8. ໃຫ້ໃຊ້ແນວຄິດໃນບາດກ້າວທີ 5 ແລະ 6, ແລ້ວມາສົນທະນາກັນອີກ. ຈົ່ງເປີດໂອກາດໃຫ້ຜູ້ທີ່ບໍ່ມັກເວົ້າໃຫ້ອອກຄວາມຄິດເຫັນ ແລະໃຫ້ໄດ້ເວົ້າແດ່.

9. ເມື່ອທ່ານຫາກມີຄວາມສັມພັນບໍ່ທັມດາຫລື ຖືກໂຈມຕີໂດຍທີ່ບໍ່ມີມູນຄວາມຈິງແລ້ວ ຈົ່ງໃຊ້ຊີວິດຢ່າງຈະແຈ້ງໂດຍອີງໃສ່ພຣະທັມຄັມພີ.
   ກ. ການດຳເນີນຊີວິດຕາມປົກຕິ ແມ່ນການຕໍ່ສູ້ຢ່າງໃຫຍ່.
   ຂ. ການກະທຳທຸກຢ່າງຕ້ອງບໍຣິສຸດ, ຖ້າຈະປ້ອງກັນກໍຕໍ່ເມື່ອປ້ອງກັນເພື່ອຄຣິສຕະຈັກທ່ານັ້ນ
   ຄ. ຈົ່ງໃຫ້ຄຳເວົ້າຄຳຈາຂອງທ່ານເປັນທັມດາ.
   ງ. ທ່ານຕ້ອງຮູ້ຈັກວ່າ ທ່ານຄວນຈະອີງໃຜໄດ້.
   ຈ. ຮັບເອົາການເປັນຜູ້ນຳ, ແຕ່ຕ້ອງເປັນຄົນຖ່ອມຕົວໃນການເວົ້າຈາກັບຜູ້ອື່ນໆ
   ສ. ຕ້ອງສຳແດງຄວາມຮັກໃຫ້ເຫັນໄດ້ຢ່າງຊັດເຈນຕໍ່ທຸກຄົນ ແລະຕໍ່ຄຣິສຕະຈັກ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ວັດແທກການປ່າວປະກາດຂອງພວກເຮົາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 2:14--3:6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 2:14--3:18

**ຈຸດສຳຄັນຂອງບົດຮຽນນີ້:** ການປ່າວປະກາດຂອງຄຣິສຕຽນຄວນຈະຖືກວັດແທກດ້ວຍມາຕະຖານຊີວິດການເປັນຢູ່ຂອງຄຣິສຕຽນ.

**ຄຳຖາມເພື່ອສຳຣວດ:** ຈະວັດແທດຊີວິດການເປັນຢູ່ຂອງຄຣິສຕຽນຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ຮູ້ຈັກຄັກແນ່ວ່າໂປໂລວັດແທກການປ່າວປະກາດຂອງລາວຢ່າງໃດ ແລ້ວມາຊັ່ງຊາຕີລາຄາກັບການປ່າວປະກາດຂອງຕົວເຮົາເອງ ແລະຄຣິສຕະຈັກຂອງເຮົາດ້ວຍ.

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ເລີ້ມຕົ້ນບົດຮຽນດ້ວຍການວາງຄຳຖາມທີ່ມີຢູ່ໃນເຈັ້ຽບົດຮຽນ. ຈະວັດແທກຢ່າງໃດໃນການສຳເຣັດວຽກງານຂອງແຕ່ລະບຸກຄົນ? ທ່ານອາດຈະໃຊ້ອະທິບາຍເລີຍກໍໄດ້. ແບ່ງປັນຈົດໝາຍຂອງໂປໂລ ທີ່ຂຽນຫາຊາວເມືອງໂກຣິນໂທເພື່ອທີ່ຈະໄດ້ຊ່ວຍໃຫ້ພວກເຮົາເຂົ້າໃຈວິທີການວັດແທກດີຂຶ້ນ ໃນການປ່າວປະກາດ.

2. ອະທິບາຍເຫດຜົນທີ່ໂປໂລສະແດງຄວາມຮູ້ບຸນຄຸນໃນການຂຽນຈົດໝາຍ. (ນີ້ແມ່ນການເລີ້ມຕົ້ນຈົດໝາຍດ້ວຍວິທີທີ່ດີທີ່ສຸດ, 7:8) ລອງຖາມນັກຮຽນເບິ່ງວ່າບົດຮຽນທີ່ຜ່ານມາສອງບົດລາວໄດ້ສະແດງເໝືອນກັນນີ້ບໍ່? ໃຫ້ນັກຮຽນຄົນນຶ່ງອະທິຖານຂອບພຣະຄຸນ ຫລືວ່າສະແດງຄວາມຮູ້ບຸນຄຸນທີ່ຈະໄດ້ຮຽນບົດຮຽນໃນວັນນີ້.

## ນຳພາການສຶກສາພຣະຄັມພີ:

3. ໃຫ້ອ່ານ 2ໂກຣິນໂທ 2:14-16, ແບ່ງປັນໃນຫົວຂໍ້ທີ່ວ່າ "ສລອງຊັຍຊະນະຂອງພຣະຄຣິດ" ຊຶ່ງມີເຣື່ອງຊັຍຊະນະຂອງທ່ານນາຍພົນທະຫານໂຣມັນ ແລະຊັຍຊະນະຂອງພຣະເຢຊູຄຣິດ.
   ຖາມ: ສົມທຽບເບິ່ງດູວ່າ ຊັຍຊະນະຂອງໃຜທີ່ເປັນປໂຍດແກ່ຜູ້ອື່ນຫລາຍກວ່າກັນ? ຊີ້ແຈງໃຫ້ນັກຮຽນຮູ້ຊັ່ງຊາຕີລາຄາເຖິງການດຳເນີນຊີວິດຂອງແຕ່ລະຄົນ. ເຮົາຈະດີໃຈຫລືບໍ່ດີໃຈ ໃນເມື່ອເຫັນເພື່ອນຝູງທີ່ບໍ່ມາໂບດ?

4. ອ່ານ 3:1-3 ໃຫ້ທຸກຄົນໄດ້ຍິນໄດ້ຟັງ. ຖາມ: ໂປໂລມີຄວາມຄິດຢ່າງໃດໃນຈົດໝາຍແນະນຳຂອງລາວ? ໃຫ້ແບ່ງປັນໂດຍອີງຕາມເຈັ້ຽບົດຮຽນ. ອະທິບາຍວ່າໃນສມັຍຂອງໂປໂລເປັນຢ່າງໃດ. ເປັນຫຍັງໂປໂລຈຶ່ງບໍ່ເຫັນສຳຄັນໃນໜັງສືຢັ້ງຢືນວ່າລາວເປັນໃຜແລະປະກາດເພື່ອຫຍັງ?
   ນຳພານັກຮຽນໃຫ້ພິຈາລະນາຊັ່ງຊາຕີລາຄາເຖິງຄວາມສຳເຣັດ. ພວກເຂົາອີງໃສ່ພື້ນຖານອັນໃດໃນ

ການເພີ້ມພູນຫລືໃນຄວາມສັມພັນ?

5. ອ່ານ 3:4-6 ດັ່ງງ ສລູບເຂົ້າຫາກັນ 3:7-18, ແລ້ວອະທິບາຍສັ້ນໆ ຣະຫວ່າງພຣະສັນຍາເກົ່າແລະພຣະສັນຍາໃຫມ່ ຊຶ່ງໂປໂລສເນີໃນຂໍ້ຄວາມເຫລົ່ານີ້. ອະທິບາຍສອງພຣະສັນຍານີ້ໃນເຈົ້ຽບົດຣຽນ. ຕຽມກະດານເພື່ອໃຫ້ນັກຮຽນໄດ້ເຫັນດ້ວຍຕາ:

| ພຣະສັນຍາເກົ່າ | ພຣະສັນຍາໃຫມ່ |
|---|---|
| ກ. ຊຶ່ງປ່ຽນແປງໄດ້, ບໍ່ຍັ້ງຍືນ | ກ. ຖາວອນ, ຕລອດໄປ |
| ຂ. ຮຽກຮ້ອງສິ່ງທີ່ບໍ່ສາມາດເປັນໄປໄດ້ | ຂ. ພຣະຄຣິດຈະກະທຳ ສິ່ງທີ່ເຮົາເຮັດບໍ່ໄດ້ |
| ຄ. ກົດຫມາຍຈະມີແຕ່ການລົງໂທດຢ່າງດຽວ | ຄ. ພຣະຄຣິດຈະຍົກຍ້າຍການລົງໂທດອອກ |
| ງ. ປະກາດການປະຫານຊີວິດ (ການຕາຍ) | ງ. ຈັດຕຽມຊີວິດອັນຕລອດໄປ |
| ຈ. ອີງຕາມການປະຕິບັດວຽກງານ | ຈ. ອີງຕາມພຣະຄຸນ |
| ສ. ສະງ່າຣາສີຈະມີຂອບເຂດສ່ວນບຸກຄົນ (ໂມເຊ) | ສ. ຈະມີແກ່ທຸກງຄົນ |

ສະງ່າຣາສີຈະມີຈຳກັດໃນສ່ວນບຸກຄົນ ເຊັ່ນ: ໂມເຊ. ແຕ່ສະງ່າຣາສີຂອງພຣະເຈົ້າຈະປົກຫຸ້ມທຸກງຄົນທີ່ເຊື່ອ ແລະທຸກງຄົນທີ່ຢູ່ໃນພຣະຄຣິດ. ສະງ່າຣາສີນີ້ຈະຍັ້ງຍືນແລະບໍ່ຫລຸດນ້ອຍລົງ. ມີແຕ່ຈະເພີ້ມທະວີຂຶ້ນໄປຕາມລຳດັບຂອງມັນຈາກນຶ່ງເປັນສອງ ຕໍ່ງຂຶ້ນໄປ....

ທ້າທາຍໃຫ້ນັກຮຽນທຸກຄົນ ຮັບຜິດຊອບແລະຮູ້ຈັກຊັ່ງຊາຕີລາຄາໃນພຣະຄຸນທີ່ຕົນໄດ້ຮັບຈາກພຣະເຈົ້າ. ທ່ານພູມໃຈໃນຄວາມມີອິສລະພາບໃນພຣະເຢຊູຄຣິດຫລືບໍ່? ຫລືວ່າທ່ານຍັງເຫັນວ່າຕົວເອງຍັງຢູ່ໃນກົດບັນຍັດຢູ່?

## <u>ຄຳຫນູນໃຈສຳລັບບົດຣຽນນີ້:</u>

6. ຈື່ການສົນທະນາຕອນແລກງໄດ້ບໍ່? ວ່າຈະວັດແທກຢ່າງໃດໃນການສຳເຣັດວຽກງານຂອງບຸກຄົນ? ໂປໂລໃຊ້ວິທີແບບໃດຕາມທີ່ໄດ້ຮຽນມາ. ສິ່ງເຫລົ່ານີ້ຢູ່ໃນນັ້ນບໍ່?
ວິທີຂອງເຮົາມີຄວາມເມດຕາກະຣຸນາບໍ່? 2 ໂກຣິນໂທ 2:17-18
ຈຸດປະສົງຂອງເຮົາແມ່ນເຮັດໃຫ້ມີການເຕີບໂຕຂຶ້ນໃນພຣະຄຣິດບໍ່? 2 ໂກຣິນໂທ 3:1-3
ອຳນາດຂອງເຮົາໄດ້ມາຈາກພຣະເຢຊູຄຣິດບໍ່? 2 ໂກຣິນໂທ 3:5

7. ໃຫ້ນັກຮຽນສຳຣວດກວດກາເບິ່ງມາຕະຖານຂອງຕົວເອງໃນການປ່າວປະກາດ. ສົມທຽບໃສ່ກັບໂປໂລລອງເບິ່ງ, ແນະນຳໃຫ້ນັກຮຽນໃຊ້ວິທີຂອງໂປໂລ ເຫັນວ່າຈະໄດ້ຜົນດີ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 4</u>
# <u>ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u> 2 ໂກຣິນໂທ 4:1-15

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> 2 ໂກຣິນໂທ 4:1-15

<u>ຈຸດສຳຄັນຂອງບົດຮຽນນີ້:</u> ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້ ໃນຖ້າມກາງການທ້າທາຍທີ່ປະເຊີນຢູ່ ຮຽກຮ້ອງໃຫ້ມີຄວາມສັດຊື່ ແລະໄວ້ວາງໃຈພຣະເຈົ້າຫມົດຈິດຫມົດໃຈ.

<u>ຄຳຖາມເພື່ອການສຳຫລວດ:</u> ພວກເຮົາຈະເຮັດຢ່າງໃດຈຶ່ງບໍ່ທໍ້ຖອຍໃນການຮັບໃຊ້?

<u>ຈຸດປະສົງຂອງບົດຮຽນນີ້:</u> ຫາດແທ້ຂອງໂປໂລທີ່ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້ ຊຶ່ງພວກເຮົາຈຳເປັນຈະຕ້ອງນຳມາປະຕິບັດ.

## <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ໃຫ້ເອົາເຣື່ອງຕົວຢ່າງຫລານຂອງຜູ້ຂຽນຈາກ <u>ບົດຮຽນຂອງສະມາຊິກໃນຫ້ອງ</u> ມາເປີດຫົວເຣື່ອງຂອງບົດຮຽນ. ຫນູນໃຈໃຫ້ສະມາຊິກຫ້ອງຮຽນຕຶກຕອງເຖິງເຣື່ອງທີ່ເຮັດໃຫ້ພວກເຂົາທໍ້ຖອຍ. ຮ້ອງຂໍໃຫ້ບາງຄົນອອກມາແບ່ງປັນເຣື່ອງລາວສາຍເຫດທີ່ນຳມາໃຫ້ເກີດຄວາມທໍ້ຖອຍ.

2. ໃຫ້ກ່າວຕໍ່ສະມາຊິກຫ້ອງຮຽນວ່າ ມື້ນີ້ພວກເຮົາຈະໄດ້ຮຽນຈາກຊີວິດຂອງ ໂປໂລ ລາວເຮັດຢ່າງໃດເມື່ອລາວປະເຊີນກັບຄວາມທໍ້ຖອຍ. ພວກເຮົາຢາກຈະຊອກຫາບ່ອນທີ່ມາຂອງການໃຫ້ກຳລັງໃຈ ແມ່ນໃຫ້ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້.

### <u>ສຶກສາບົດຮຽນ</u>

3. ນຳພາສະມາຊິກຫ້ອງໃຫ້ທົບທວນເບິ່ງເຫດຜົນບາງຢ່າງທີ່ຈະທຳໃຫ້ ໂປໂລ ມີຄວາມທໍ້ຖອຍ ເຊັ່ນ: ຖືກກ່າວຫາໂດຍບໍ່ເປັນຄວາມຈິງ, ຖືກຂົ່ມເຫງ, ເກີດມີຄວາມສັບສົນຈິດໃຈເນື່ອງຈາກການກະທຳອັນບໍ່ຖືກຕ້ອງບາງຢ່າງໃນຄຣິສຕະຈັກເມືອງ ໂກຣິນໂທ, ແລະເຣື່ອງສ່ວນຕົວຂອງລາວເອງ. ໃຫ້ນຳເອົາຂໍ້ຄິດຈາກບົດຮຽນຂອງອາທິດທີ່ຜ່ານມາອີກດ້ວຍ.

4. ໃຫ້ກ່າວຕໍ່ສະມາຊິກຫ້ອງວ່າ ໃນບົດຮຽນຂອງອາທິດນີ້ພວກເຮົາໄດ້ພົບເຫດຜົນຢ່າງຫນ້ອຍມີຢູ່ສິບຢ່າງທີ່ເຮັດໃຫ້ໂປໂລ ບໍ່ທໍ້ຖ້ອຍ (ໃຫ້ເບິ່ງໃນ <u>ບົດຮຽນຂອງສະມາຊິກຫ້ອງ</u>). ໃຫ້ຜູ້ນຶ່ງອ່ານ 4:1-15 ດັງໆ ເພື່ອທຸກຄົນຈະໄດ້ຍິນແລະຟັງເບິ່ງຫາເຫດຜົນດັ່ງກ່າວນີ້.
   (1) ພຣະກະຣຸນາແລະພຣະຄຸນອັນອັສຈັນໃຈຂອງພຣະເຈົ້າ (4:1)
   (2) ໂປໂລໄດ້ຮັບການຫນູນໃຈຈາກຄວາມຈິງຂອງຂ່າວປະເສີດ (4:2)
   (3) ຂ່າວປະເສີດນັ້ນມີເຫດແລະຜົນ ເຖິງແມ່ນວ່າຜູ້ຟັງຈະເຊື່ອຫລືບໍ່ເຊື່ອກໍຕາມ (4:3-4)

(4) ແສງຣັສມີຂອງຂ່າວປະເສີດ (4:6)

(5) ຊັບສົມບັດທີ່ມີຄຸນຄ່າອັນແທ້ຈິງຂອງຂ່າວປະເສີດ (4:7)

(6) ພຣະເຈົ້າຊົງບໍ່ມີຂອບເຂດຈຳກັດ ແລະຄວາມອຸດົມສົມບູນຂອງພຣະອົງ (4:8-9)

(7) ຂໍ້ເລີກລັບຂອງການມີກຳລັງຂຶ້ນໃຫມ່ໃນແຕ່ລະວັນ (4:11)

(8) ຄວາມເຊື່ອທີ່ບໍ່ສັ່ນຄອນ (4:13)

(9) ເຣື່ອງຂອງຊີວິດອັນຕລອດໄປເປັນນິດ (4:14)

(10) ໂປໂລມີຈິດໃຈສຸມໃສ່ໃນການຮັບໃຊ້ (4:15)

5. ໃຫ້ອ່ານ 4:8-9 ອີກຄັ້ງນຶ່ງ ແລະໃຫ້ສລູບຄຳຕອບຂອງໂປໂລໃນເວລາລາວຂາດກຳລັງໃຈ. ໃຫ້ນຳຂໍ້ມູນຈາກ <u>ບົດຮຽນຂອງສະມາຊິກຫ້ອງ</u> ເຣື່ອງໂປໂລຖືກຂົ່ມເຫງແລະຖືກຄວາມລຳບາກ (4:10-12), ຢູ່ໃຕ້ຫົວຂໍ້ "ຄວາມອຸດົມສົມບູນຂອງພຣະເຈົ້າ (4:8-14). ຕໍ່ມາໃຫ້ຖາມວ່າ, <u>ເປັນຫຍັງໂປໂລຈຶ່ງປະກາດແລະສອນຕໍ່ໄປຢູ່ເລື້ອຍໆ ເຖິງແມ່ນວ່າລາວຈະຖືກຂົ່ມເຫງກໍຕາມ?</u> (ໃຫ້ສະມາຊິກຫ້ອງຕອບ.ໃຫ້ເບິ່ງເຫດຜົນສິບຢ່າງ.)

6. ຖ້າເວລາພຽງພໍ ໃຫ້ສົນທະນາກັນຈາກຄຳຖາມຂໍ້ທີ 3 ຈາກ<u>ບົດຮຽນຂອງສະມາຊິກຫ້ອງ</u>, " ການເຜີຍແຜ່ຄຣິສຕະສາສນາຈະເປັນຢ່າງໃດ ຖ້າຫາກວ່າໂປໂລເຊົາໄປກ່ອນ?

## <u>ຫມູນໃຊ້ໃນການກະທຳ</u>

7. ຮ້ອງຂໍໃຫ້ສະມາຊິກຫ້ອງຄິດຫາ ຢ່າງຫນ້ອຍໃຫ້ໄດ້ສາຍເຫດອັນນຶ່ງທີ່ເຮັດໃຫ້ທໍ້ຖອຍ ຊຶ່ງພວກເຂົາໄດ້ປະເຊີນຢູ່ໃນວັນນີ້. ຫມູນໃຈໃຫ້ພວກເຂົາເລືອກເອົາຢ່າງຫນ້ອຍເຫດຜົນອັນນຶ່ງໃນຈຳນວນສິບອັນທີ່ໄດ້ຮຽນມາ ເພື່ອຈະຊ່ອຍພວກເຂົາໃນເມື່ອອະນາຄົດເກີດທໍ້ຖອຍຫລືເສັຽກຳລັງໃຈ.

8. ປິດຫ້ອງຮຽນດ້ວຍການອະທິຖານ ໃຫ້ພຣະເຈົ້າຊ່ອຍໃຫ້ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# ມີຄວາມໝັ້ນໃຈໃນປະຈຸບັນແລະສືບໆໄປ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 2 ໂກຣິນໂທ 4:16-5:10
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 4:16-5:10
**ຈຸດສຳຄັນຂອງບົດຮຽນນີ້:** ດ້ວຍພະລັງຂອງພຣະເຈົ້າແລະພຣະວິນຍານຊີງເປັນເຄື່ອງມັດຈຳໄວ້ກັບພວກເຮົາ ພວກເຮົາຈຶ່ງສາມາດປະເຊີນກັບຄວາມຍາກລຳບາກໃນຊີວິດນີ້ ແລະເຖີງແມ່ນວ່າ ຄວາມຕາຍຈະຕາມມາກໍຕາມ ພວກເຮົາຍັງມີຄວາມໝັ້ນໃຈຢູ່ໃນພຣະເຈົ້າ.
**ຄຳຖາມເພື່ອການສຳຫລວດ:** ເມື່ອຊີວິດຖຸກຄາມແລະປະເຊີນກັບຄວາມຕາຍ ມີຄວາມຫວັງອັນໃດອີກແດ່?
**ຈຸດປະສົງຂອງບົດຮຽນນີ້:** ໄດ້ຮັບຮອງດ້ວຍຄວາມໝັ້ນໃຈໃນຄຳປະກັນຂອງພຣະເຈົ້າຊົງປະທານໃຫ້ ເພື່ອຈະໄປປະເຊີນກັບຄວາມຍາກລຳບາກໃນຊີວິດນີ້ ແລະເຖີງແມ່ນວ່າຄວາມຕາຍຈະຕາມມາກໍຕາມ.

## ແຜນການສິດສອນ

## ຊີວິດສະພາບຕົວຈິງ

1. ໃຫ້ເລົ່າເຣື່ອງຂອງ ເດວິດ ບຸສ ຈາກ ຄູມືຂອງສະມາຊິກຫ້ອງ ໃຫ້ພວກເຂົາຟັງ. ຕໍ່ມາ ໃຫ້ຖາມພວກເຂົາວ່າ ຖ້າເດວິດຖາມທ່ານວ່າ ເປັນຫຍັງພຣະເຈົ້າຈຶ່ງປະຂ້ອຍໄວ້ຢູ່ໃນໂລກນີ້, ທ່ານຈະຕອບລາວວ່າຢ່າງໃດ? ຫລັງຈາກພວກເຂົາຕອບແລ້ວ, ໃຫ້ອ່ານຂໍ້ຄວາມຈາກ ຈຸດສຳຄັນຂອງບົດຮຽນນີ້.

2. ໃຫ້ຕຽມເຈັ້ຽແຂວສີຂາວໄວ້ເພື່ອຂຽນຫົວຂໍ້ຂອງບົດຮຽນແຕ່ລະອາທິດໃສ່ໃນເຈັ້ຽນັ້ນ. ໃຫ້ຂຽນຫົວຂໍ້ໃຫຍ່ໃສ່ທາງກາງຂ້າງເທີງວ່າ: ຮັບໃຊ້ກັບຝູງຊົນທີ່ບໍ່ເຫັນພ້ອມ.ໃຫ້ສະມາຊິກຫ້ອງຮຽນບອກຫົວຂໍ້ຂອງບົດຮຽນແຕ່ລະອາທິດຂອງສີ່ອາທິດທີ່ຜ່ານມາ ແລະຮ່ວມທັງບົດຮຽນຂອງມື້ນີ້.
   1. ເວລາມີຄວາມທົນທຸກທໍຣະມານ
   2. ເມື່ອຄວາມສຳພັນຫາກບໍ່ທັມມະດາ
   3. ວັດແທກການປ່າວປະກາດຂອງພວກເຮົາ
   4. ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້
   5. ມີຄວາມໝັ້ນໃຈໃນປະຈຸບັນແລະສືບໆໄປ
   6. ມີຄວາມດີນໃຈໃຫ້ຮັບໃຊ້

   ໃຫ້ຂີດລູກສອນໃສ່ຫົວຂໍ້ຂອງບົດຮຽນອາທິດນີ້ ແລ້ວຊີ້ໃຫ້ພວກເຂົາເຫັນວ່າຫົວຂໍ້ຂອງບົດຮຽນອາທິດນີ້ເຂົ້າກັບສະພາບການຂອງຫົວຂໍ້ໃຫຍ່ ເຣື່ອງການຮັບໃຊ້ໃນເວລາອັນຍາກລຳບາກ.

## ສຶກສາບົດຮຽນ

3. ໃຫ້ສັງເກດເບິ່ງບົດຮຽນຂອງອາທິດນີ້ເຕັມໄປດ້ວຍການປຽບທຽບຄວາມແຕກຕ່າງກັນລະຫວ່າງຊີວິດໃນໂລກນີ້

ແລະຄວາມຫວັງຂອງພວກເຮົາກັບເມືອງສວັນ. ໃຫ້ສັງເກດເບິ່ງອັນກົງກັນຂ້າມອັນທີນຶ່ງ: "ພາຍນອກຊຸດໂຊມໃນຂະນະທີ່ໃຈພາຍໃນກຳລັງຈະເຣີນຂຶ້ນ." ໃຫ້ອ່ານພຣະທັມ 2 ໂກຣິນໂທ 4:16-18 ພ້ອມໆກັນ. ຊີ້ໃຫ້ພວກເຂົາເຫັນວ່າ ໂປໂລໃຊ້ຄຳວ່າ "ເບົາບາງ" ແລະ "ຊົ່ວຂນະນຶ່ງ" ຂອງການທໍຣະມານຂອງລາວ. ໃຫ້ນຳພວກສະມາຊິກຄົ້ນເບິ່ງພຣະທັມ 2 ໂກຣິນໂທ 1:8-11 ແລະ 4:8-11 ໂປໂລແລະເພື່ອນຮ່ວມເດີນທາງຂອງລາວປະເຊີນກັບອັນໃດໃນການເດີນທາງ. ໃຫ້ຖາມວ່າ, <u>ຖ້າເຫດການຢ່າງນີ້ເກີດຂຶ້ນກັບພວກທ່ານເດ, ທ່ານຈະບັນລະຍາຍໃຫ້ເປັນຄຳເວົ້າໄດ້ຢ່າງໃດ? ເປັນຫຍັງຈຶ່ງສຳຄັນແທ້ຊື່ງໂປໂລໄດ້ກ່າວສອງເທື່ອວ່າ "ເຮົາຈຶ່ງບໍ່ທໍ້ຖອຍ" (4:1, 16)?</u>

4. ໃຫ້ຖາມວ່າ, <u>ແມ່ນຫຍັງທີ່ເຮັດໃຫ້ພວກເຮົາທໍ້ຖອຍໃນຂະນະທີ່ພວກເຮົາຮັບໃຊ້ພຣະເຈົ້າ?</u> (ຄຳຕອບອາດຈະເປັນເຊັ່ນນີ້: ຖືກຕິຕຽນ, ພາຣະໜັກ, ຂາດການປະສານງານ, ຄວາມເຈັບປ່ວຍ, ສຸຂພາບມີຂອບເຂດຈຳກັດ, ຄວາມຮູ້ສຶກຖືກໜີບເຕັງ, ສົງສັຍ.) ຫລັງຈາກພວກເຂົາຕອບໄປແລ້ວ ໃຫ້ພວກເຂົາອອກຄວາມຄິດເຫັນເຖິງສິ່ງທີ່ຊ່ອຍໂປໂລໃຫ້ໃຈພາຍໃນຈະເຣີນຂຶ້ນໃຫມ່ແຕ່ລະວັນ. ໂດຍອ້າງອີງຕາມຂໍ້ທີ 17-18 ແລະຖາມວ່າ, <u>ແມ່ນການປຽບທຽບອັນໃດທີ່ເຮັດໃຫ້ຍຶດໝັ້ນຢູ່ໃນການທຸກລຳບາກຢູ່ໃນໂລກນີ້?</u> (ຊົ່ວຄາວ, ຕລອດໄປເປັນນິດ)

5. ໃຫ້ສັງເກດເບິ່ງອັນກົງກັນຂ້າມອັນທີສອງ: "ໃຊ້ຊີວິດຢູ່ໃນປະຈຸບັນໃນຂະນະທີ່ຄອງຄອຍເຖິງອະນາຄົດ." ໃຫ້ອ່ານພ້ອມກັນໃນພຣະທັມ 2 ໂກຣິນໂທ 5:1-8, ຊຶ່ງມີການປຽບທຽບລະຫວ່າງຊີວິດໃນໂລກນີ້ແລະໃນສວັນ. ຊີ້ໃຫ້ພວກເຂົາເບິ່ງຂໍ້ທີ 1 ໃນຂະນະທີ່ທ່ານກຳລັງຊອກຫາຄຳຖາມ. ໃຫ້ພວກເຂົາຕອບຄຳຖາມດັ່ງຕໍ່ໄປນີ້:

- ຂໍ້ທີ 1: ແມ່ນຫຍັງຄືຄວາມຫວັງຂອງພວກເຮົາເມື່ອຮ່າງກາຍຂອງພວກເຮົາເລີ້ມຊຸດໂຊມລົງ? (ຮ່າງໃຫມ່)
- ຂໍ້ທີ 2-4: ໂປໂລໄດ້ບັນລະຍາຍເຖິງຄວາມຢ້ານຂອງຄວາມຕາຍຂອງພວກເຮົາຢ່າງໃດ? (ໂອ່ຍອາລັຍຢູ່)
- ຂໍ້ທີ 5: ພຣະວິນຍານບໍຣິສຸດຊ່ອຍພວກເຮົາໃນການລັ່ງເລໃຈນີ້ຢ່າງໃດ? (ພຣະວິນຍານເປັນເຄື່ອງມັດຈຳ)
- ຂໍ້ທີ 6: ຄວາມແນ່ນອນໃຈກ່ຽວກັບສວັນຊ່ອຍໃຫ້ພວກເຮົາສູ້ທົນຕໍ່ຄວາມລຳບາກໃນຊີວິດນີ້ໄດ້ຢ່າງໃດ? (ເພື່ອໃຫ້ພວກເຮົາມີຄວາມຫວັງ)
- ຂໍ້ທີ 7: ດຳເນີນໄປຕາມຄວາມເຊື່ອ ແລະດຳເນີນໄປຕາມທີ່ຕາເຫັນມີຄວາມແຕກຕ່າງຢ່າງໃດ?
- ຂໍ້ທີ 8: ໂປໂລເລືອກເອົາອັນໃດທີ່ລາວຄິດວ່າດີກວ່າກັນ? ທ່ານສາມາດເຫັນພ້ອມກັບລາວບໍ່?

6. ຊີ້ໃຫ້ເຫັນອັນກົງກັນຂ້າມອັນທີສາມ: "ໃຫ້ເປັນທີ່ພໍພຣະທັຍຂອງພຣະເຈົ້າໃນຂະນະທີ່ເຖິງເວລາອັນຄວນ" ໃຫ້ອ່ານພຣະທັມ 2 ໂກຣິນໂທ 5:9-10 ພ້ອມກັນ. <u>ໂປໂລມີເປົ້າໝາຍຊີວິດອັນໃດ ທີ່ຊ່ອຍໃຫ້ລາວຢືນຢັດໃນການຮັບໃຊ້ໂດຍຜ່ານທາງຄວາມທຸກລຳບາກ? ເມື່ອຮູ້ເຖິງການຕັດສິນຂອງພຣະເຈົ້າມີຜົນສະທ້ອນຕໍ່ການເລືອກສັນຂອງທ່ານ ແລະອຸປະນິສັຍຂອງທ່ານໃນວັນນີ້ຫລາຍປານໃດ?</u>

## <u>ໜູນໃຊ້ໃນການກະທຳ</u>

7. ໃຫ້ຮ້ອງເພງ "ເມືອງສວັນບໍ່ມກາງຄືນ" ເພງນີ້ເຂົ້າກັບບົດຮຽນ. ທ້າທາຍໃຫ້ສະມາຊິກຫ້ອງປັກຕາໃສ່ສິ່ງອັນຕລອດໄປເປັນນິດໃນຂະນະທີ່ຮັບໃຊ້ພຣະຄຣິດແຕ່ລະວັນ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ໄດ້ຮັບແຮງຈູງໃຈໃຫ້ຮັບໃຊ້

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ຂ ໂກຣິນໂທ 5:11-21
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ຂ ໂກຣິນໂທ 5:11-21
**ຈຸດສຳຄັນຂອງບົດຮຽນນີ້:** ມີອັນໃດແດ່ທີ່ພຣະເຈົ້າໄດ້ກະທຳເພື່ອພວກເຮົາໃນພຣະຄຣິດຈົນເຖິງຂັ້ນເປັນແຮງຈູງໃຈໃຫ້ພວກເຮົາຮັບໃຊ້.
**ຄຳຖາມເພື່ອການສຳຣວດ:** ແມ່ນອັນໃດເປັນແຮງຈູງໃຈຂອງທ່ານ?
**ຈຸດປະສົງຂອງບົດຮຽນນີ້:** ໃຫ້ຕັດສິນໃຈໃນທິດທາງທີ່ຂ້າພະເຈົ້າຈະຕອບສນອງຕໍ່ແຮງຈູງໃຈຈາກພຣະເຈົ້າໃຫ້ຮັບໃຊ້.

## ແຜນການສິດສອນ

## ຊີວິດສະພາບຕົວຈິງ

1. ເລີ້ມຕົ້ນຈາກຂໍ້ຄວາມເຫລົ່ານີ້ ແລ້ວໃຫ້ຕື່ມຄວາມຄິດເຫັນລົງໃຫ້ຈົບໃນຂໍ້ຄວາມດັ່ງຕໍ່ໄປນີ້.
   - ດິນຟ້າອາກາດດີຈຶ່ງເປັນແຮງຈູງໃຈໃຫ້ຂ້າພະເຈົ້າ...
   - ໄດ້ຮັບໂທຣະສັບຈາກເພື່ອນຈຶ່ງເປັນແຮງຈູງໃຈໃຫ້ຂ້າພະເຈົ້າ...
   - ໄດ້ຮັບເງິນຈາກພາສີຂອງຣັຖບານຈຶ່ງເປັນແຮງຈູງໃຈໃຫ້ຂ້າພະເຈົ້າ...
   - ເຫັນເດັກນ້ອຍອຶດຫິວໃນຂ່າວໂທຣະທັດຈຶ່ງເປັນແຮງຈູງໃຈໃຫ້ຂ້າພະເຈົ້າ...
   - ທວນລະນຶກເຖິງສິ່ງທີ່ພຣະເຢຊູໄດ້ກະທຳເພື່ອຂ້າພະເຈົ້າທີ່ໄມ້ກາງແຂນຈຶ່ງເປັນແຮງຈູງໃຈໃຫ້ຂ້າພະເຈົ້າ...

2. ໃຫ້ອ່ານຂໍ້ຄຳຖາມຈາກ **ຄຳຖາມເພື່ອການສຳຣວດ** ແລະ **ຈຸດສຳຄັນຂອງບົດຮຽນ** ແລະທົບທວນເບິ່ງຂໍ້ພຣະຄັມພີ ຂ ໂກຣິນໂທ: "ໃຫ້ຮັບເອົາການຮັບໃຊ້ເປັນຂອງສ່ວນຕົວ." ຮ້ອງເພງ "ແຜ່ຂ່າວເຣື່ອງຄວາມພົ້ນໄປ" ຫລືວ່າຈະອ່ານເອົາກໍໄດ້.

## ສຶກສາບົດຮຽນ

3. ໃຫ້ໃຊ້ເຈັ້ຽແຂວງສີຂາວໃບເກົ່າຕັ້ງແຕ່ອາທິດແລ້ວ ຊຶ່ງມີຫົວຂໍ້ຕ່າງໆຂອງບົດຮຽນແຕ່ລະທິດ. ໃຫ້ຂຽນຫົວຂໍ້ຂອງບົດຮຽນອາທິດນີ້ລົງໄປ.
   1. ເວລາມີຄວາມທົນທຸກທໍຣະມານ
   2. ເມື່ອຄວາມສຳພັນຫາກບໍ່ທັມມະດາ
   3. ວັດແທກການປ່າວປະກາດຂອງພວກເຮົາ
   4. ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້
   5. ມີຄວາມໝັ້ນໃຈໃນປະຈຸບັນແລະສືບໆໄປ

6. ໄດ້ຮັບແຮງຈູງໃຈໃຫ້ຮັບໃຊ້

4. ຊີ້ໃຫ້ສະມາຊິກຫ້ອງເບິ່ງຫົວຂໍ້ບົດຮຽນຂອງວັນທີນຶ່ງໃນ <u>ຄູ່ມືຂອງສະມາຊິກຫ້ອງ</u>: "ໄດ້ຮັບແຮງຈູງໃຈດ້ວຍວ່າມີໃຈສຳນຶກຜິດແລະຊອບຕໍ່ພຣະເຈົ້າແລະຄົນອື່ນໆ." ໃຫ້ພວກເຂົາຂີດວົງກົມໃສ່ຄຳວ່າ "ມີໃຈສຳນຶກຜິດແລະຊອບ" ແລະຖາມພວກເຂົາເຖິງຄວາມຫມາຍຂອງຄຳນັ້ນ. ໃຫ້ຖາມອີກວ່າ <u>ມີໃຈສຳນຶກຜິດແລະຊອບແລະ ແຮງຈູງໃຈມີຄວາມສຳພັນຢ່າງໃດ?</u>

ໃຫ້ຂຽນຄຳດັ່ງກ່າວນີ້ໃສ່ກະດານ : <u>ຄວາມຢຳເກງ, ຄວາມສຳພັນ, ການໃຫ້ກຽດ</u>. ໃຫ້ຟັງເບິ່ງຄວາມຫມາຍຂອງຂໍ້ຄວາມເຫລົ່ານີ້ໃນຂນະທີ່ໃຫ້ຄົນນຶ່ງອ່ານ 5:11-13 ດັງໆ. ຕິດຕາມດ້ວຍຄຳຖາມ ເພື່ອໃຫ້ພວກເຂົາຕອບຕາມ <u>ຄູ່ມືຂອງສະມາຊິກຫ້ອງ:</u>

- ຂໍ້ທີ 11: ຄວາມຢຳເກງມີຄວາມກ່ຽວຂ້ອງອັນໃດກັບ 5:10 ຈາກບົດຮຽນອາທິດທີ່ຜ່ານມາ? ໂປໂລມີຄວາມຮູ້ສຶກຢ່າງໃດກ່ຽວກັບ ມີໃຈສຳນຶກຜິດແລະຊອບ? ມີຄວາມສຳພັນກັບຄົນໃດຄົນນຶ່ງກໍ່ໃຫ້ເກີດມີໃຈສຳນຶກຜິດແລະຊອບໃນການຮັບໃຊ້ພວກເຂົາໄດ້ຢ່າງໃດ? ເຮົາຈະມີທາງໃດໃນການໃຊ້ຊີວິດຂອງເຮົາເພື່ອເປັນການຊັກຊວນໃຫ້ຄົນອື່ນຟັງຄຳພຍານຂອງເຮົາ?
- ຂໍ້ທີ 12: ເປັນຫຍັງໂປໂລຈຶ່ງປະສົງໃຫ້ຄຣິສຕຽນເມືອງໂກຣິນໂທໃຫ້ກຽດລາວ? ເມື່ອມີຄົນໃຫ້ກຽດເຮົາຈະມີໂອ
  ກາດຮັບໃຊ້ຄົນອື່ນໄດ້ຫລາຍຂຶ້ນຢ່າງໃດ?

5. ຕໍ່ໄປແມ່ນຫົວຂໍ້ບົດຮຽນຂອງວັນທີສອງ, "ໄດ້ຮັບແຮງຈູງໃຈດ້ວຍຄວາມຮັກຂອງພຣະຄຣິດ." ໃຫ້ສະມາຊິກຫ້ອງຂີດວົງກົມໃສ່ຄຳວ່າ "ຄວາມຮັກ" ແລະຖາມວ່າ <u>ທ່ານມີໃຈສຳນຶກຜິດແລະຊອບຕໍ່ຄົນໃດຄົນນຶ່ງບໍ່ແຕ່ລະວັນໃນວຽກງານຂອງທ່ານ? ຄົນຜູ້ນັ້ນໃຊ້ວິທີທາງອັນໃດຈຶ່ງເປັນແຮງຈູງໃຈໃຫ້ທ່ານເປັນຢ່າງນັ້ນ?</u>
   ຫນູນໃຈໃຫ້ພວກເຂົາຟັງເບິ່ງແນວຄິດຂອງຄຳວ່າ "ຄວາມຮັກ" ໃນ 5:14-15 ໃນຂນະທີ່ໃຫ້ຜູ້ນຶ່ງອ່ານພຣະທັມຕອນນີ້. ໃຫ້ຂຽນຄຳດັ່ງກ່າວນີ້ໃນກະດານ: <u>ບັງຄັບ, ຄິດເຫັນ, ຄົນທັງປວງ, ຖືກສ້າງຂຶ້ນໃຫມ່</u>. ຕິດຕາມດ້ວຍຄຳຖາມໂດຍໃຊ້ <u>ຄູ່ມືຂອງສະມາຊິກຫ້ອງ</u> ເປັນທີ່ໃຫ້ຄວາມຄິດ.
   - ຂໍ້ທີ 14: ພຣະຄຣິດ <u>ບັງຄັບ</u> ພວກເຮົາດ້ວຍຄວາມຮັກ, ຫລືພວກເຮົາກະທຳໄປດ້ວຍຄວາມຮູ້ບຸນຄຸນ? ແມ່ນຫຍັງເຮັດໃຫ້ໂປໂລຄິດເຫັນວ່າລາວມອບຊີວິດຂອງລາວເພື່ອຮັບໃຊ້ຄົນອື່ນ?
   - ຂໍ້ທີ 15: ພຣະຄຣິດຊົງວາຍພຣະຊົນເພື່ອໃຜ? ຄຳວ່າ "ຄົນທັງປວງ" ໄດ້ຂຍາຍແຜ່ ໃຈສຳນຶກຜິດແລະຊອບຂອງ
     ພວກເຮົາໃຫ້ໄປບອກຂ່າວເຣື່ອງການໃຫ້ອະພັຍບາບຢ່າງໃດ?
   - ຂໍ້ທີ 16: ມີຫຍັງຈະເກີດຂຶ້ນຖ້າຄຣິສຕຽນ "ຫລົ້ນພັກຫລົ້ນພວກ?" ແທນທີ່ຈະຍົກຍໍພຣະເຢຊູແຕ່ໄປຍົກຍໍຕົວເຮົາ
     ເອງເປັນໄປໄດ້ຢ່າງໃດ?
   - ຂໍ້ທີ 17: ແມ່ນອັນໃດໃຫ້ພະລັງແກ່ພວກເຮົາປະຕິບັດດ້ວຍຄວາມຮັກຕໍ່ຜູ້ທີ່ບໍ່ເປັນຕາຮັກ?

6. ຕໍ່ໄປແມ່ນຫົວຂໍ້ບົດຮຽນຂອງວັນທີສາມ, "ໄດ້ຮັບແຮງຈູງໃຈດ້ວຍການມອບຫມາຍຈາກພຣະເຈົ້າ," ແລະໃຫ້ພວກເຂົາຂີດວົງກົມໃສ່ຄຳວ່າ "ການມອບຫມາຍ." ໃຫ້ຖາມໄປວ່າ ມີໃຜບໍ່ເຄີຍພົວພັນກັບ ອັຄຣາຊທູດຕ່າງໆ. ຖາມວ່າ <u>ແມ່ນຫຍັງຄືທູດ</u>? (ຜູ້ທີ່ຖືກສົ່ງໄປຕ່າງປະເທດເພື່ອໃຫ້ລາວເປັນຜູ້ຕາງຫນ້າຂອງປະເທດຂອງລາວ.) <u>ທູດເຫລົ່ານີ້ໄດ້ຂ່າວສານມາຈາກໃສເພື່ອໄປສເນີໃຫ້ປະເທດອື່ນ</u>?

ໜູນໃຈໃຫ້ສະມາຊິກຫ້ອງຟັງ ເພື່ອທຳຄວາມເຂົ້າໃຈໃນພຣະທັມຕໍ່ໄປນີ້ ໃນຂນະທີ່ໃຫ້ຜູ້ນຶ່ງອ່ານ 5:18-21 ດັງໆ. ຊັກຊວນໃຫ້ພວກເຂົາສົນທະນາຈາກຄຳຖາມຕໍ່ໄປນີ້:

- ຂໍ້ທີ 18: ປະສົບການສ່ວນຕົວໃນຄວາມລອດພົ້ນເຮັດໃຫ້ເຮົາມີຄຸນວຸດທິເປັນທູດຂອງພຣະຄຣິດໄດ້ຢ່າງໃດ?
- ຂໍ້ທີ 19 ແລະ 21: ພວກເຮົາມີຂ່າວອັນໃດທີ່ຈະນຳໄປໃຫ້ຄົນອື່ນ? ມີຄຳໃດແດ່ທີ່ໃຫ້ຄວາມໝາຍຄ້າຍຄືກັນກັບຄຳວ່າ "ການຄືນດີກັນ"? (ໃຫ້ອະພັຍ, ເປັນເພື່ອນ, ສາມັກຄີທັມ, ຖືກຕ້ອງກັນ)

7. ພຣະເຈົ້າເຮັດໃຫ້ພຣະເຢຊູ "ເຂົ້າສ່ວນກັບຄວາມຜິດບາບ"?

ພຣະເຈົ້າເຮັດໃຫ້ພຣະເຢຊູ "ເຂົ້າສ່ວນກັບຄວາມຜິດບາບ" (2 ໂກຣິນໂທ 5:21) ຂໍ້ຄວາມນີ້ມີຄວາມໝາຍຢ່າງໃດ? ໂປໂລໄດ້ຂຽນວ່າ ພຣະເຈົ້າເຮັດໃຫ້ພຣະເຢຊູ "ເຂົ້າສ່ວນກັບຄວາມຜິດບາບ" ພຣະເຢຊູບໍ່ໄດ້ເປັນຜູ້ເຮັດບາບ. ຄວາມແຕກຕ່າງໃນຄຳເວົ້ານີ້ສຳຄັນຫລາຍ. ພຣະເຈົ້າບໍ່ໄດ້ເຮັດໃຫ້ຜູ້ໃດບາບ.

ພຣະເຢຊູບໍ່ເຄີຍຮູ້ບາບໃນທິດທາງຂອງພວກເຮົາເຮັດມາ. ພຣະເຢຊູຖືກທົດລອງໃຫ້ເຮັດບາບ ແຕ່ພຣະອົງບໍ່ເຄີຍເຮັດບາບ (ເຮັບເຣີ 4:15). ພຣະອົງບໍ່ມີບາບຢູ່ເລື້ອຍມາຕລອດເຖິງທີ່ໄມ້ກາງແຂນ. ປະສົບການທີ່ໄມ້ກາງແຂນ ພຣະອົງເປັນເຄື່ອງບູຊາຂອງການໄຖ່ບາບ. ພຣະເຈົ້າຊົງເອົາບາບຂອງພວກເຮົາວາງລົງໃສ່ພຣະເຢຊູ (ເອຊາຢາ 53:6), ສະນັ້ນພຣະອົງໄດ້ແບກບາບຂອງພວກເຮົາໃສ່ຕົວພຣະອົງທີ່ໄມ້ກາງແຂນ (1 ເປໂຕ 2:24). ດ້ວຍການກະທຳຢ່າງນີ້ ພຣະເຢຊູເປັນທີ່ "ຖືກປ່ອຍຄ່າເພື່ອພວກເຮົາ" (ຄາລາເຕັຽ 3:13). ພຣະອົງຖືກຕັດສິນຍ້ອນຄວາມຜິດແລະຄ່າຂອງຄວາມບາບຂອງພວກເຮົາ. ພຣະເຈົ້າເຮັດໃຫ້ພຣະເຢຊູ "ເຂົ້າສ່ວນກັບຄວາມຜິດບາບ" ເພື່ອພວກເຮົາ ສະນັ້ນພວກເຮົາຈຶ່ງກາຍເປັນຜູ້ຊອບທັມຂອງພຣະເຈົ້າໃນຄວາມສຳພັນກັບພຣະເຢຊູ.

## <u>ໜູນໃຊ້ໃນການກະທຳ</u>

8. ໃນຂນະທີ່ທຸກໆຄົນກົ້ມຫົວລົງອະທິຖານຢ່າງງຽບໆ, ໃຫ້ແນະນຳພວກເຂົາດັ່ງຕໍ່ໄປນີ້: ໃຫ້ທ່ານວາດມະໂນພາບວ່າທ່ານກຳລັງຄຸເຂົ່າຢູ່ຕໍ່ໜ້າພຣະຄຣິດໃນຂນະນີ້. ພຣະຄຣິດຊົງມອບໝາຍໃຫ້ທ່ານເປັນທູດໃຫ້ກັບພຣະອົງ. ພຣະອົງມອບເອກສານໃຫ້ທ່ານຊຶ່ງມີຕຣາຂອງພຣະອົງທັບໃສ່ໂດຍມີຂໍ້ຄວາມດັ່ງຕໍ່ໄປນີ້:

> ເຮົາໄດ້ໄຖ່ຄວາມຜິດບາບຂອງເຈົ້າແລ້ວ, ແລະຍິນດີຕ້ອນຮັບທຸກໆຄົນທີ່ມາຮ້ອງຂໍໃຫ້ຄວາມອະພັຍ ແລະເຂົ້າມາສາມັກຄີທັມນຳເຮົາ. ເຈົ້າຈະນຳຂ່າວສານນີ້ໄປບອກຄົນທີ່ເຈົ້າຮູ້ໃຫ້ເຮົາໄດ້ແນ່ບໍ?

ໃຫ້ຖາມວ່າ <u>ພວກທ່ານຈະຕອບວ່າຢ່າງໃດ</u>?

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນທີ 7
# ຈົ່ງຊື່ສັດ, ຈົ່ງເປັນຈິງ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 2 ໂກຣິນໂທ 6: 1-13; 7:2-4
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** 2 ໂກຣິນໂທ 6: 1-7:4
**ຈຸດສໍາຄັນຂອງບົດຮຽນນີ້:** ແບບຢ່າງແລະຄວາມສັມພັນອັນສັດຊື່ເປັນເຄື່ອງມືທີ່ມີຣິດເດດໃນການຮັບໃຊ້.

**ຄໍາຖາມເພື່ອການສໍາຣວດ:** ແບບຢ່າງແລະຄວາມເວົ້າຂອງທ່ານບອກກັບຄົນອື່ນໆແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລູບເບິ່ງຄໍາອະທິບາຍຂອງໂປໂລເຣື່ອງການຮັບໃຊ້ ແລະຄໍາຮ້ອງຂໍຂອງທ່ານກັບຊາວໂກຣິນໂທ ແລະເບິ່ງຄວາມໝາຍສໍາລັບຊີວິດຂອງຂ້ອຍໃນປັດຈຸບັນ.

## ແຜນສໍາລັບການສອນ

### ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ນໍາຮູບຄອບຄົວສອງແຜ່ນທີ່ໃສ່ຂອບຮຽບຮ້ອຍມາເປັນຕົວຢ່າງ. ຫໍ່ຮູບແຜ່ນນຶ່ງດ້ວຍເຈັ້ຍປາສຕິກທີ່ເບິ່ງຊອດຂ້າງໃນ. ອີກແຜ່ນນຶ່ງໃຫ້ຫໍ່ດ້ວຍເຈັ້ຽໜັງສືພິມຊຶ່ງບໍ່ສາມາດເບິ່ງຊອດ. ປະຮູບທັງສອງໄວ້ຕໍ່ໜ້າຫ້ອງຮຽນແລ້ວຖາມວ່າ: ມີຫຍັງແຕກຕ່າງກັນຣະຫວ່າງຮູບສອງແຜ່ນນີ້? ຫໍ່ໃດດີກວ່າກັນ? ມີຫຍັງແຕກຕ່າງກັນຣະຫວ່າງບຸກຄົນເປີດແປນ (ຄົນທີ່ຄົນອື່ນສາມາດເຂົ້າໃຈໄດ້ງ່າຍ) ແລະບຸກຄົນທີ່ເຕັມດ້ວຍຄວາມເລິກລັບ?

2. ໃຫ້ນັກຮຽນຄົນນຶ່ງອ່ານຫົວຂໍ້ "ຈຸດສໍາຄັນຂອງບົດຮຽນນີ້." ຂຽນຂໍ້ຄວາມນີ້ໃສ່ໜ້າກະດານ :

| |
|---|
| "ຄວາມຊື່ສັດຄືນະໂຍບາຍທີ່ດີເລີດ"<br><br>ຖືກຕ້ອງ, ເພາະວ່າ ______________________________<br><br>ບໍ່ຖືກຕ້ອງສເມີໄປ, ເພາະວ່າ ______________________________ |

ໃຫ້ໂອກາດນັກຮຽນເພື່ອຕອບຊ່ອງຫວ່າງສອງບ່ອນຂ້າງເທິງນີ້. ຖາມ: ການເປັນຄົນເປີດແປນມີຈຸດອ່ອນແນວໃດ? ມີຫຍັງແດ່ທີ່ພວກເຮົາສາມາດໃຊ້ເປັນເຄື່ອງປ້ອງກັນຕົວເອງຖ້າພວກເຮົາຈະຖືເອົາຫລັກການເຣື່ອງເຮັດທຸກຢ່າງແບບຊື່ສັດໃນຊີວິດ?

### ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ແບ່ງນັກຮຽນອອກເປັນສອງກຸ່ມ (ປະມານ 6 ຄົນ, ຖ້າມີຄົນຫລາຍກວ່າ 6 ຄົນໃນແຕ່ລະກຸ່ມ ໃຫ້ຕັ້ງກຸ່ມເພີ້ມ). ແຕ່ງກຸ່ມທີນຶ່ງໃຫ້ສຶກສາພຣະທັມ 2 ໂກຣິນໂທ 6:1-3, 11-13 ຕາມທັສນະຂອງທ່ານໂປໂລ ແລະອີກກຸ່ມທີສອງ ໃຫ້ສຶກສາພຣະທັມຂໍ້ດຽວກັນຕາມທັສນະຂອງຄຣິສຕຽນຊາວໂກຣິນໂທ. ໃຫ້ເວລາປະມານ 5 ນາທີ.

<u>ກຸ່ມ ໂປໂລ</u>: ຜູ້ນຳໃນຄຣິສຕະຈັກມີຄວາມຮັບຜິດຊອບແນວໃດແດ່ເຣື່ອງການຮັກສາຄວາມສັມພັນອັນດີໃນຄຣິສຕະຈັກຂອງພຣະຄຣິດ?

<u>ກຸ່ມ ໂກຣິນໂທ</u>: ສະມາຊິກໃນຄຣິສຕະຈັກມີຄວາມຮັບຜິດຊ
ອບແນວໃດແດ່ເຣື່ອງການຮັກສາຄວາມສັມພັນອັນ
ດີໃນຄຣິສຕະຈັກຂອງພຣະຄຣິດ?

ຖາມຄວາມເຫັນຂອງແຕ່ລະກຸ່ມ.

4. ໃຫ້ຜູ້ນຶ່ງອ່ານ 2 ໂກຣິນໂທ 6: 3-10. ໃຊ້ຄຳຖາມຂ້າງລຸ່ມນີ້ເພື່ອຊ່ວຍຫາຂໍ້ຄິດ.
<u>ພິຈາຣະນາເບິ່ງ ຂໍ້ 4-5 ແລະ 8-10:</u>

- ໃນການຖືກລຳບາກຂອງໂປໂລແລະເພື່ອນຮ່ວມງານ, ມີຫຍັງແດ່ທີ່ມາຈາກເຫດການຂ້າງນອກ?
- ມີຫຍັງແດ່ທີ່ເກີດຂຶ້ນເພາະພວກເພິ່ນບໍ່ຍອມລົດລະເວລາພົບບັນຫາ?
- ມີຫຍັງແດ່ທີ່ອາດຈະຮ້າຍແຮງຈາກຂ້າງນອກຄຣິສຕະຈັກ?
- ເວລາຊາວໂກຣິນໂທເບິ່ງຊີວິດຂອງໂປໂລ, ມີຫຍັງແດ່ທີ່ຈະເຮັດໃຫ້ພວກເຂົາໄວ້ວາງໃຈໃນຕົວທ່ານ?

<u>ພິຈາຣະນາເບິ່ງຂໍ້ 6-7:</u>

- ທ່ານໄດ້ເຫັນ "ຜົນຂອງພຣະວິນຍານ" ແນວໃດແດ່ (ອ່ານຄາລາເຕັຽ 5:22 ໃຫ້ທຸກຄົນຟັງ) ໃນຄຳຕອບຂອງໂປໂລ?
- ທ່ານໄດ້ເຫັນ "ຍຸທພັນທັງຊຸດ" ແນວໃດແດ່ (ອ່ານ ເອເຟໂຊ 6:13-18) ໃນການປ້ອງກັນຕົວຂອງໂປໂລ?
- ທ່ານເຫັນຄຳເວົ້າ ຫລືຄຳພຍານຂອງໂປໂລວ່າເປັນການອວດຕົວບໍ່? ແມ່ນຫຍັງຄືຈຸດປະສົງຂອງການເປັນພຍານຂອງທ່ານ?

5. ໃຫ້ນັກຮຽນຜູ້ນຶ່ງອ່ານ 6:13-14 ແລະ 7:2-4 ແບບໃຈຮ້າຍແລະງຸດງິດ. ໃຫ້ອີກຜູ້ນຶ່ງອ່ານພຣະທັມຂໍ້ດຽວກັນແບບມີຄວາມຮັກແລະຄວາມເປີດແປນ. ພິສູດເບິ່ງຄວາມແຕກຕ່າງ:

- ປຽບທຽບເບິ່ງຄວາມຮູ້ສຶກຂອງທ່ານເວລາໄດ້ຍິນການອ່ານຂອງແຕ່ລະຄົນ.
- ທ່ານໄດ້ຮຽນຮູ້ສິ່ງໃດແດ່ກ່ຽວກັບການມີຄວາມຊື່ສັດກັບຄົນໃນຄຣິສຕະຈັກ?
- ເບິ່ງຄຳເວົ້າໃນພຣະທັມນີ້ທີ່ສະແດງເຖິງຄວາມຮັກ, ຄວາມຫ່ວງ, ແລະຄວາມເຫັນພ້ອມ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ພານັກຮຽນເຮັດຄຳສັນຍາຕໍ່ໄປນີ້:

## ຄຳສັນຍາເລື່ອງຄວາມເປີດແປນ

ພວກເຮົາທຸກຄົນໃນຫ້ອງຮຽນນີ້ໃຫ້ຄຳໝັ້ນສັນຍາກັບທ່ານວ່າ ພວກເຮົາຈະປະພຶດຕໍ່ທ່ານດ້ວຍຄວາມຮັກ, ຄວາມເປີດ ແປນ, ຄວາມສນັບສນູນ, ແລະການຍອມຮັບຊຶ່ງກັນແລະກັນ ແລະພວກເຮົາຈະປະພຶດເຊັ່ນນີ້ກັບສິດຍາພິບານແລະ ພວກຜູ້ນຳໃນຄຣິສຕະຈັກ.

ພວກເຮົາຂໍຢືນຢັນດ້ວຍຄວາມຮັກແລະການສນັບສນູນຂອງພວກເຮົາຕໍ່ທ່ານໃນມື້ນີ້, ແລະ ພວກເຮົາສັນຍາວ່າຈະອ້ອນວອນເພື່ອທ່ານແລະເພື່ອຄວາມສຳເຣັດໃນການຮັບໃຊ້ຂອງທ່ານ.

ຫ້ອງຮຽນຂອງຄະນະ ______________________

ວັນທີ ________________________________

ລາຍຊື່ສະມາຊິກ:

______________________________________________________________________________

______________________________________________________________________________

______________________________________________________________________________

_________

ພານັກຮຽນສົນທະນາວ່າຄຳສັນຍາແບບນີ້ຈະເປັນປໂຍດແກ່ພວກເຂົາເຈົ້າບໍ່. ຖາມ: ຄຳສັນຍານີ້ຈະຊ່ວຍບາງຄົນໃຫ້ ປ່ຽນນິສັຍໃໝ່ບໍ່? ຖ້າທຸກຄົນເຫັນວ່າຄຳສັນຍານີ້ຈະເປັນປໂຍດ, ໃຫ້ພານັກຮຽນລົງລາຍເຊັນຂອງເຂົາເຈົ້າ. ຂໍອະນຸ ຍາດຈາກນັກຮຽນເພື່ອຈະເອົາຄຳສັນຍານີ້ໄປໃຫ້ສິດຍາພິບານ ແລະເຖົ້າແກ່ໃນຄຣິສຕະຈັກຂອງທ່ານເບິ່ງ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 8</u>
# <u>ການໃຫ້ແລະການຮັບຄຳຕິຊົມ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 2 ໂກຣິນໂທ 7: 5-16
**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** 2 ໂກຣິນໂທ 7: 5-16
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຮຽນຮູ້ເຣື່ອງການໃຫ້ແລະການຍອມຮັບຄຳຕິຊົມວ່າເປັນພາກສ່ວນສຳຄັນຂອງການເຕີບໃຫຍ່ໃນຊີວິດຄຣິສຕຽນ.

**<u>ຄຳຖາມເພື່ອການສຳຣວດ:</u>** ທ່ານຮູ້ສຶກແນວໃດເມື່ອຖືກຄົນອື່ນຕຳນິ? ທ່ານຮູ້ສຶກແນວໃດເມື່ອທ່ານຕຳນິຄົນອື່ນ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສລູບເບິ່ງການປະເຊີນໜ້າຣະຫວ່າງໂປໂລກັບຊາວໂກຣິນໂທ, ເບິ່ງການຕອບຮັບຄຳຕຳນິຂອງໂປໂລ, ແລະຊອກຫາສິ່ງທີ່ກ່ຽວພັນກັນໃນຄວາມສັມພັນຂອງຂ້າພະເຈົ້າກັບຄົນອື່ນໆ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຊວນນັກຮຽນໃຫ້ຄິດເຖິງຄັ້ງນຶ່ງທີ່ເຂົາເຈົ້າຖືກຕິຊົມ. ຄຳຕິຊົມນັ້ນໄດ້ຊ່ວຍໃຫ້ມີການຕື່ນຕົວ ແລະໄດ້ພາໃຫ້ເຕີບໃຫຍ່ໃນພາກສ່ວນສຳຄັນຂອງຊີວິດ. ໃຫ້ເວລາເພື່ອການແບ່ງປັນ.

2. ຂີດເສັ້ນແບ່ງກະດານອອກເປັນຫ້າພາກເທົ່າໆກັນ. ໝາຍແຕ່ລະພາກດັ່ງຕໍ່ໄປນີ້: ເຫັນພ້ອມທີ່ສຸດ, ເຫັນພ້ອມ, ບໍ່ມີຄວາມເຫັນ, ບໍ່ເຫັນພ້ອມ, ບໍ່ເຫັນພ້ອມທີ່ສຸດ. ອ່ານ "ຈຸດສຳຄັນຂອງບົດຮຽນນີ້" ແລ້ວຖາມຄວາມເຫັນຂອງນັກຮຽນແຕ່ລະຄົນ ແລະຖາມວ່າເປັນຫຍັງຈຶ່ງຮູ້ສຶກແນວນັ້ນ. ບັນທຶກຄຳຕອບໃສ່ກະດານ, ໃຫ້ເວລາເລັກນ້ອຍ.

3. ຂຽນຊື່ບົດຮຽນມື້ນີ້ໃສ່ກະດານພ້ອມດ້ວຍຫົວຂໍ້ໃຫຍ່ໆ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

4. ໃຊ້ແຜນທີ່ການໄປປະກາດຂອງໂປໂລ ແລະຂໍ້ຄິດຕໍ່ໄປນີ້ເພື່ອຊ່ວຍອະທິບາຍເບື້ອງຫລັງຂອງພຣະທັມໃນມື້ນີ້:

- ໂປໂລເປັນຜູ້ກໍ່ຕັ້ງຄຣິສຕະຈັກທີ່ໂກຣິນໂທຕອນໄປປະກາດພຣະທັມຄັ້ງທີສອງ ຊຶ່ງເລີຍໄປເຖິງປະເທດກຣີກ. ເຕືອນນັກຮຽນວ່າຊາວໂກຣິນໂທເຄີຍເປັນຄົນນອກສາສນາ.
- ໃຊ້ບົດຮຽນໃນຫົວຂໍ້ "ຄຳຕິຊົມສາມາດເຮັດໃຫ້ເຈັບປວດ" ເພື່ອຊ່ວຍອະທິບາຍເຣື່ອງຄວາມບໍ່ແນ່ໃຈຂອງພວກນັກສາສນາສາດກ່ຽວກັບເບື້ອງຫລັງຂອງພຣະທັມຕອນນີ້ ແລະຄຳຕິຕຽນຂອງໂປໂລຕໍ່ຄຣິສຕະຈັກ.
- ກັບໄປເບິ່ງ 2 ໂກຣິນໂທ 2:12-13 ຊຶ່ງເປັນເບື້ອງຫລັງຂອງ 7:5-6 ທີ່ຈະສຶກສາໃນມື້ນີ້. ຊອກຫາເມືອງມາເກໂດເນັຽໃນແຜນທີ່ (ເບິ່ງພາກເໜືອຂອງປະເທດກຣີກ) ເພາະເປັນບ່ອນທີ່ໂປໂລຂຽນຈົດໝາຍສະບັບນີ້.

5. ໃຫ້ຜູ້ນຶ່ງອ່ານ 2 ໂກຣິນໂທ 7: 5-8. ໃຊ້ຂໍ້ຄິດຕໍ່ໄປນີ້ເພື່ອນໍາພາການສົນທະນາ:

- ໃຫ້ນັກຮຽນຂີດວົງອ້ອມຄໍາວ່າ "ບໍ່ໄດ້ພັກຜ່ອນຈັກຍາມ," "ຄວາມທຸກລໍາບາກ," ຄວາມຢ້ານ" ໃນພຣະຄັມພີ. ຖາມ: ຖ້ອຍຄໍາເຫລົ່ານີ້ບອກໃຫ້ຮູ້ແນວໃດແດ່ກ່ຽວກັບສະພາບຂອງໂປໂລ ຫລັງຈາກທີ່ທ່ານໄດ້ສົ່ງຈົດໝາຍໄປຕ້ອງຕິຄຣິສຕະຈັກທີ່ໂກຣິນໂທແລ້ວ?
- ໃຫ້ນັບຄໍາວ່າ "ສຸກສະບາຍ" ຫລືຄໍາເວົ້າປະເພດນີ້ວ່າມີຈັກເທື່ອໃນພຣະທັມຂໍ້ນີ້.
- ຖາມ: ສິ່ງເຫລົ່ານີ້ບອກໃຫ້ຮູ້ແນວໃດແດ່ກ່ຽວກັບຈິດໃຈຂອງໂປໂລ? ທ່ານມີຄວາມຮູ້ສຶກແນວນີ້ບໍ່ ເວລາທ່ານຈໍາເປັນຈະຕ້ອງຕິຕຽນຄົນອື່ນ ຫລືເວລາທ່ານໄດ້ຮັບການຕິຕຽນ?

6. ພານັກຮຽນຊອກຫາຜົນດີ 9 ຢ່າງທີ່ເກີດຂຶ້ນຈາກຈົດໝາຍຂອງໂປໂລ ໃນ 2 ໂກຣິນໂທ 7:9-11.

- ຂຽນໄວ້ເວລາມີຄົນພົບຜົນດີແຕ່ລະຢ່າງ (ການກັບໃຈ, ຄວາມພົ້ນ, ຄວາມຂຍັນຂັນແຂງ, ຕຽມພ້ອມທີ່ຈະແກ້ໂຂຕົວ, ຄວາມເຄືອງໃຈ, ຄວາມຕື່ນຕົວ, ຄວາມອາລັຍ, ຄວາມຮ້ອນຮົນ, ການລົງໂທດ).
- ອະທິບາຍຄວາມແຕກຕ່າງຣະຫວ່າງ "ຄວາມທຸກໃຈຕາມຢ່າງຊອບພຣະທັຍພຣະເຈົ້າ" ແລະ "ຄວາມທຸກໃຈຕາມຢ່າງໂລກ." ໃຊ້ບົດຮຽນຊ່ວຍໃນການອະທິບາຍ.
- ຖາມ: ຖ້າຄຣິສຕະຈັກຕອບຮັບຄໍາຕິຊົມໄປໃນທາງລົບ, ຄວາມສັມພັນຣະຫວ່າງໂປໂລແລຊາວໂກຣິນໂທຈະຕົກຢູ່ໃນສະພາບໃດ?
- ຂຽນຊື່ບຸກຄົນເຫລົ່ານີ້ໃສ່ກະດານ: ກາອີນ ແລະອາເບນ, ດາວິດ ແລະບາຊີບາ, ຢູດາ ອິສະກາຣີອົດ; ເປໂຕ ໃນເວລາພຣະຄຣິດຖືກຂຶ້ນສານ. ໃຫ້ນັກຮຽນເບິ່ງຜູ້ໃດ ໃນທີ່ນີ້ເປັນຕົວຢ່າງໃຫ້ເຫັນເຣື່ອງການຕອບຮັບຄໍາຕິຊົມຢ່າງຊາວໂລກ ແລະການຕອບຮັບຄໍາຕິຊົມຢ່າງພຣະເຈົ້າ.

7. ອ່ານ 7:12-16. ຖາມ: ຄວາມສໍາເຣັດຈາກຈົດໝາຍຂອງໂປໂລມີສ່ວນເຮັດໃຫ້ການຮັບໃຊ້ຂອງທ່ານແລະຊີລາເຂັ້ມແຂງຂຶ້ນໃນທາງໃດແດ່. ໃຊ້ຂໍ້ຄິດຕໍ່ໄປນີ້ຊ່ວຍໃນການສົນທະນາ:

- ໃຫ້ສະມາຊິກພິຈາຣະນາເບິ່ງວ່າຄວາມຮູ້ສຶກຂອງຜູ້ນໍາວ່າມີຄວາມສໍາຄັນບໍ່ເວລາເກີດມີການຂັດແຍ່ງຢູ່ໃນຄອບຄົວໂບດ?
- ສະມາຊິກຈະຮູ້ໄດ້ຢ່າງໃດວ່າຄໍາຕິຊົມທີ່ຜູ້ນໍາກ່າວອອກມານັ້ນວ່າມາຈາກພຣະເຈົ້າແລະຄວນຈະຕ້ອງເອົາໃຈໃສ່ແລະປະຕິບັດຕາມ?
- ໃຫ້ສະມາຊິກອ່ານພຣະທັມ 2 ຕີໂມທຽວ 3:16-17; ເຮັບເຣີ 4:12-13; ແລະ ໂຢຮັນ 16:7-8. ເບິ່ງວ່າພຣະທັມສອນແນວໃດກ່ຽວກັບເຣື່ອງວ່າທຸກຄົນຕ້ອງການ ການປັບປຸງແກ້ໄຂໃຫ້ຖືກຕ້ອງ?

## ນໍາບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

8. ຂຽນຄໍາຖາມແຕ່ລະຂໍ້ໃນທ້າຍບົດຮຽນນີ້ໃສ່ກະດາດ. ຄໍາຖາມຂໍ້ນຶ່ງໃຫ້ໃຊ້ກະດາດນ້ອຍແຜ່ນນຶ່ງ. ຫລັງຈາກຂຽນແລ້ວໃຫ້ພັບນ້ອຍໆ ແລ້ວເອົາໃສ່ໃນໝວກ. ໃຫ້ນັກຮຽນແຕ່ລະຄົນຈົກເອົາເຈັ້ຍນຶ່ງແຜ່ນອອກຈາກໝວກ (ຄ້າຍໆກັບການຈົກສລາກ). ໃຫ້ແຕ່ລະຄົນອ່ານຄໍາຖາມນັ້ນ ແລ້ວຕອບ. ໃຫ້ຂໍ້ຄິດເພີ່ມເຕີມໂດຍການໃຊ້ "ຄໍາສອນສໍາລັບພວກເຮົາ" ໃນບົດຮຽນນີ້ ຊ່ວຍ.

9. ແບ່ງກະດານອອກເປັນສອງສ່ວນ ຂີດເສັ້ນຜ່ານກາງແຕ່ເທິງຫາລຸ່ມ. ຝ່າຍນຶ່ງຂຽນຫົວຂໍ້ "ຈົ່ງເຮັດ" ແລະອີກຝ່າຍນຶ່ງຂຽນ "ບໍ່ຄວນເຮັດ." ນຳກຸ່ມເພື່ອການໃຫ້ຄຳແນະນຳວ່າມີສິ່ງໃດແດ່ທີ່ພວກເຮົາຈົ່ງເຮັດຫລືບໍ່ຄວນເຮັດໃນເວລາພວກເຮົາຕິຊົມຄົນອື່ນ ຫລືເວລາເຮົາໄດ້ຮັບຄຳຕິຊົມ ໂດຍອີງເຖິງພຣະທັມທີ່ໄດ້ສຶກສາໃນມື້ນີ້.

10. ອ້ອນວ້ອນເພື່ອປິດການສຶກສາພຣະທັມ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ເຫດຜົນຂອງການຖວາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຂ ໂກຣິນໂທ 8: 1-21
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຂ ໂກຣິນໂທ 8
**ຈຸດສຳຄັນຂອງບົດຮຽນນີ້:** ຮຽນຮູ້ເຖິງເຫດຜົນວ່າເປັນຫຍັງພວກເຮົາຈຶ່ງມີການຖວາຍເພື່ອວຽກງານຂອງພຣະເຈົ້າ.

**ຄຳຖາມເພື່ອການສຳຣວດ:** ການຖວາຍຊັບສິນຂອງທ່ານຖືກຕ້ອງຕາມຄຳສອນໃນພຣະສັນຍາໃໝ່ຫລືບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຮູ້ເຫດຜົນຂອງການຖວາຍຊັບ ແລະຈະໄດ້ເຫັນຄວາມສຳຄັນຂອງການຖວາຍໃນຊີວິດຂອງຂ້ອຍ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 30 ນາທີ)

1. ຖາມ: ທ່ານຄິດວ່າຄຣິສຕຽນໃນເຂດອະເມຣິກາເໜືອມີຄວາມຮັບຜິດຊອບເຣື່ອງການຊ່ວຍເຫລືອທາງດ້ານການເງິນສຳລັບຄຣິສຕຽນທີ່ຢູ່ໃນປະເທດທີ່ກຳລັງພັທນາບໍ່? ໃຫ້ເວລາສຳລັບສອງຄົນເພື່ອຕອບຄຳຖາມ.
2. ບອກນັກຮຽນວ່າໃນມື້ນີ້ພວກເຂົາເຈົ້າຈະໄດ້ຮຽນຮູ້ເຖິງເຫດຜົນຫລາຍຢ່າງເຣື່ອງການຖວາຍ ແລະບອກວ່າທຸກຄົນຈະມີໂອກາດໄດ້ສຳຣວດເບິ່ງການຖວາຍຂອງຕົນເອງ. ຂຽນໃສ່ກະດານວ່າ: "ເຫດຜົນຂອງການຖວາຍ."

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ໃຊ້ໂປສເຕີ້ສາມແຜ່ນ; ໃຫ້ຂຽນຂໍ້ຄວາມນີ້ໃສ່ແຕ່ລະແຜ່ນ: ຄຣິສຕຽນທີ່ກຸງເຢຣູຊາເລັມ; ຄຣິສຕະຈັກທີ່ເມືອງມາເກໂດເນັຽ; ຄຣິສຕະຈັກທີ່ເມືອງໂກຣິນໂທ. ເອົາໂປສເຕີ້ສາມແຜ່ນນີ້ປະໄວ້ທາງໜ້າຫ້ອງຮຽນເພື່ອທຸກຄົນຈະໄດ້ເຫັນ. ບອກນັກຮຽນວ່າບົດຮຽນໃນມື້ນີ້ແມ່ນພົວພັນກັບສາມເມືອງນີ້. ໃຊ້ບົດບັລຍາຍໃນຫົວຂໍ້: "ການຖວາຍຈະຕ້ອງໄປທີ່ຄຣິສຕະຈັກ (8:1) ແລະ "ການຖວາຍຈະຕ້ອງມາຈາກໃຈ" (8:2-9). ອະທິບາຍສະຖານະການແລະສິ່ງແວດລ້ອມຂອງຄຣິສຕຽນແຕ່ລະກຸ່ມ. ຖ້າມີແຜນທີ່ສຳລັບເຂດນີ້ກໍໃຫ້ໃຊ້ເພື່ອຊ່ວຍໃຫ້ນັກຮຽນເຫັນພື້ນທີ່. ຖາມ: ທ່ານຄິດວ່າໂບດຂອງພວກເຮົາມີສ່ວນຄ້າຍຄືກັບຄຣິສຕຽນກຸ່ມໃດໃນບົດຮຽນນີ້?

4. ໃຫ້ຄົນນຶ່ງອ່ານ ຂ ໂກຣິນໂທ 8:1-9. ນຳພາການສົນທະນາໂດຍໃຊ້ຄຳຖາມຕໍ່ໄປນີ້:
   - ເປັນຫຍັງການຖວາຍທີ່ເມືອງມາກາໂດເນັຽຈຶ່ງໄດ້ຮັບການຍ້ອງຍໍແທ້?
   - ໂປໂລຮ້ອງຂໍໃຫ້ຄຣິສຕະຈັກທີ່ໂກຣິນໂທເຮັດຫຍັງ?
   - ທ່ານຄິດວ່າເປັນຫຍັງໂປໂລຈຶ່ງເວົ້າເຣື່ອງໂບດທີ່ເມືອງມາກາໂດເນັຽໃຫ້ຊາວໂກຣິນໂທຟັງ?
   - ເຣື່ອງນີ້ປະທັບໃຈພວກເຮົາແນວໃດແດ່ກ່ຽວກັບເຣື່ອງການຖວາຍ?
   - ແບບຢ່າງເຣື່ອງການຖວາຍຂອງຄົນອື່ນໜູນໃຈພວກເຮົາແນວໃດແດ່?

5. ຂຽນ "ຕົວຢ່າງການຖວາຍຂອງຄົນອື່ນ" ໃສ່ກະດານກ້ອງຫົວຂໍ້ "ເຫດຜົນຂອງການຖວາຍ" ທີ່ໄດ້ຂຽນໄວ້ແລ້ວ.

6. ໃຫ້ແຕ່ລະຄົນອ່ານ 2 ໂກຣິນໂທ 10-15 ຢ່າງງຽບໆ, ແລະໃຫ້ແຕ່ລະຄົນຊອກຫາເຫດຜົນວ່າເປັນຫຍັງຈຶ່ງມີການຖວາຍ. ຫລັງຈາກໄດ້ຄຳຕອບແລ້ວໃຫ້ຂຽນໃສ່ກະດານ. ຄຳຕອບອາດຈະມີຫລາຍໆຢ່າງເຊັ່ນ: ຄວາມສມ່ຳສເມີຣະຫວ່າງຜູ້ຮັ່ງມີແລະຜູ້ຍາກຈົນ; ເພື່ອເຮັດຕາມຄຳສັນຍາທີ່ໃຫ້ໄວ້; ກ້າວໜ້າໃນພຣະຄຸນເຣື່ອງການຖວາຍ; ເພື່ອຕອບການຊົງໃຫ້ຂອງພຣະເຢຊູ. ຖາມ: ເຫດຜົນເຫລົ່ານີ້ແມ່ນຂໍ້ໃດທີ່ຖືກກັບສະພາບການໃນສມັຍນີ້ ແລະເປັນຫຍັງ?

7. ໃຫ້ຜູ້ນຶ່ງອ່ານ 2 ໂກຣິນໂທ 8:16-21 ໃຫ້ທຸກຄົນໄດ້ຍິນ. ບອກທຸກຄົນວ່າເຫດຜົນທີ່ສຳຄັນເຣື່ອງການຖວາຍຄືຄວາມຮັບຜິດຊອບເຣື່ອງຊັບສິນ; ຂຽນເຫດຜົນນີ້ຕື່ມໃສ່ກະດານ. ພານັກຮຽນເບິ່ງຄຳເວົ້າຂອງໂປໂລເຣື່ອງການຮັກສາເງິນທີ່ເກັບໄດ້. ໃຊ້ບົດຮຽນຫົວຂໍ້ "ເງິນຖວາຍຈະຕ້ອງຖືກດູແລດ້ວຍຄວາມສັດຊື່ (8:6-21)" ເພື່ອຊ່ວຍ. ປິດການອະທິບາຍບົດຮຽນດ້ວຍຂໍ້ຄວາມຕໍ່ໄປນີ້:

- ເປັນຫຍັງຄວາມສຳພັນຣະຫວ່າງໂປໂລແລະຄຣິສຕຽນທີ່ໂກຣິນໂທຈຶ່ງເກີດມີບັນຫາ.
- ບຸກຄົນທີ່ໂປໂລເລືອກໃຫ້ໄປຮັບຂອງຖວາຍ. ຖາມ: ຄວາມບໍ່ເປັນຣະບຽບເຣື່ອງການຮັກສາເຄື່ອງຖວາຍມີສ່ວນໃນການຖວາຍຂອງຄົນແນວໃດແດ່?

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ໃຫ້ນັກຮຽນຜູ້ນຶ່ງອ່ານເຫດຜົນສຳຄັນສຳລັບການຖວາຍທີ່ຂຽນໄວ້ໃນກະດານໃຫ້ທຸກຄົນຟັງ. ຊັກຊວນໃຫ້ທຸກຄົນພິຈາຣະນາເບິ່ງເຫດຜົນແຕ່ລະຢ່າງທີ່ຮຽນມາໃນມື້ນີ້. ໃຫ້ທຸກຄົນຄິດເຖິງເຫດຜົນທີ່ພວກເຂົາເຈົ້າຖວາຍ. ຖາມ: ເຫດຜົນທີ່ທ່ານຖວາຍກົງກັບເຫດຜົນໃນພຣະທັມທີ່ຮຽນມາບໍ່? ທ່ານຄວນຈະປ່ຽນແປງແນວໃດ?

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 10</u>
# <u>ພຣະພອນຈາກການຖວາຍ</u>

---

<u>**ຂໍ້ພຣະຄັມພີສຳລັບບົດຮຽນນີ້:**</u> 2 ໂກຣິນໂທ 9:6-15
<u>**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:**</u> 2 ໂກຣິນໂທ 9
<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ພຣະເຈົ້າຊົງອວຍພຣະພອນພວກເຮົາຢ່າງລົ້ນເຫລືອເວລາພວກເຮົາຖວາຍ.

<u>**ຄຳຖາມເພື່ອການສຳຣວດ:**</u> ການຖວາຍເປັນພອນຫລາຍກວ່າກັບຮັບແທ້ບໍ່?
<u>**ຈຸດປະສົງຂອງບົດຮຽນນີ້:**</u> ເພື່ອອະທິບາຍພຣະພອນທີ່ພຣະເຈົ້າຊົງປະທານເວລາພວກເຮົາຖວາຍ.

## <u>ແຜນສຳລັບການສອນ</u>

<u>**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**</u>

1. ກ່ອນເວລາຮຽນ, ໃຫ້ຊອກຫານັກຮຽນຄົນນຶ່ງທີ່ສັດຊື່ເຣື່ອງການຖວາຍແລະໄດ້ຮັບພຣະພອນໃນຊີວິດ ເພື່ອຈະໄດ້ເປັນພຍານແບບສັ້ນໆວ່າການໃຫ້ນັ້ນເປັນບໍ່ເກີດຂອງພຣະພອນຢ່າງຫລວງຫລາຍໃນຊີວິດ.

2. ບອກນັກຮຽນວ່າໃນບົດຮຽນນີ້ພວກເຂົາເຈົ້າຈະໄດ້ຮຽນຮູ້ເຖິງພຣະພອນທີ່ເກີດຈາກການໃຫ້ ແລະພວກເຂົາເຈົ້າຈະໄດ້ມີໂອກາດອະທິບາຍພຣະພອນຕ່າງໆ. ຂຽນຊື່ບົດຮຽນນີ້ນີ້ພ້ອມດ້ວຍຂໍ້ພຣະຄຳໃສ່ກະດານ.

<u>**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**</u>

3. ສລູບ 2 ໂກຣິນໂທ 9:1-5 ແບບສັ້ນໆໃຫ້ນັກຮຽນຟັງ ແລະຊ່ວຍໃຫ້ນັກຮຽນເຂົ້າໃຈບຸກຄົນທີ່ກ່ຽວຂ້ອງ:
   - ຜູ້ຮັບ
   - ຜູ້ຖວາຍ (ຄຣິສຕະຈັກທີ່ມາເກໂດເນັຽ, ທີ່ໂກຣິນໂທ, ແລະອື່ນໆ)
   - ຜູ້ເກັບຮັກສາຂອງຖວາຍ (ໂປໂລ, ຕິໂຕ, ແລະອີກສອງຄົນທີ່ຖືກເລືອກ)
   - ຄຳສັນຍາຄັ້ງທຳອິດຂອງຊາວໂກຣິນໂທ

   ຖາມ: ເປັນຫຍັງຈຶ່ງສຳຄັນຫລາຍສຳລັບຊາວໂກຣິນໂທທີ່ຈະເຮັດໃນສິ່ງທີ່ພວກເຂົາເຈົ້າໄດ້ຕັ້ງໃຈໄວ້ ກ່ຽວກັບເຣື່ອງການຖວາຍ.

4. ໃຫ້ຜູ້ນຶ່ງອ່ານ 2 ໂກຣິນໂທ 9:6-11. ຂຽນຫົວຂໍ້ທີ່ນຶ່ງຂອງບົດຮຽນໃສ່ກະດານ ("1. ການຖວາຍຈະນຳພຣະພອນມາໃຫ້ພວກເຮົາ 9:6-11"). ຂຽນຄຳຖາມຕໍ່ໄປນີ້ໃສ່ກະດາດຂນາດ 4×6; ຂຽນໃສ່ໃບລະຂໍ້. ຢາຍໃຫ້ແຕ່ລະຄົນ; ໃຫ້ແຕ່ລະຄົນຕອບຄຳຖາມທີ່ຕົນໄດ້ຮັບ.
   (1) ທ່ານຄິດວ່າໂປໂລໝາຍເຖິງຫຍັງເວລາທ່ານເວົ້າເຣື່ອງການຫວ່ານແລະການເກັບກ່ຽວ?
   (2) ຫລັກການນີ້ເປັນຄວາມຈິງແນວໃດເຣື່ອງການຖວາຍ? ຫລືເຣື່ອງອື່ນໆໃນຊີວິດ?

(3) ບຸກຄົນທີ່ມີອຸດົມການເຣື່ອງວັດຖຸອາດຈະເຂົ້າໃຈຜິດພຣະທັມຂໍ້ນີ້ແນວໃດແດ່?

(4) ການເກັບກ່ຽວແນວໃດທີ່ໂປໂລຊັກຊວນຊາວໂກຣິນໂທໃຫ້ພາກັນລົງທຶນໃສ່?

(5) ເປັນຫຍັງຄຣິສຕຽນໃນທຸກໆສມັຍຄວນຈະລົງທຶນໃນການເກັບກ່ຽວປະເພດນີ້?

(6) ມີຄໍາເວົ້າສໍາຄັນຄໍາໃດແດ່ໃນຂໍ້ 7? ຄໍາເວົ້ານີ້ບອກໃຫ້ຮູ້ແນວໃດກ່ຽວກັບການຖວາຍທີ່ພຣະເຈົ້າຊົງພໍພຣະທັຍ?

(7) ແມ່ນຫຍັງຄືຜົນຂອງການຖວາຍສໍາລັບຜູ້ໃຫ້ປະເພດນີ້?

5. ອະທິບາຍວ່າຕາມທັສນະຂອງຄົນທົ່ວໄປແລ້ວ, ຜູ້ໃຫ້ຍອມຈະເປັນຜູ້ເສັຽ. ແມ່ນແຕ່ຄຣິສຕຽນຜູ້ມີຄວາມນິຍົມເຣື່ອງວັດຖຸກໍຈະຖືວ່າ "ຖ້າເຂົາໃຫ້ພຣະເຈົ້າຫລາຍ, ເຂົາກໍຈະມີເຫລືອນ້ອຍລົງ." ເຊີນໃຫ້ທຸກຄົນອ່ານຫລັກການຂອງພຣະເຈົ້າກ່ຽວກັບການໃຫ້ໃນ 2 ໂກຣິນໂທ 9:8-11 ອີກເທື່ອນຶ່ງ.

6. ພານັກຮຽນພິຈາຣະນາເບິ່ງພຣະທັມຕອນນີ້ໂດຍໃຊ້ຂໍ້ຄິດຕໍ່ໄປນີ້ຊ່ວຍ:

- ພຣະຄຸນຂອງພຣະເຈົ້າເປັນບໍ່ເກີດຂອງການຖວາຍຂອງພວກເຮົາ, 9:8-9
- ພຣະຄຸນຂອງພຣະເຈົ້າເປັນບໍ່ເກີດຂອງຄວາມອຸດົມສົມບູນ, 9:10
- ພຣະເຈົ້າຊົງໃຫ້ພອນພວກເຮົາເພື່ອເຮົາຈະໄດ້ເປັນຖໍ່ພຣະພອນໄປເຖິງຄົນອື່ນ, 9:11

7. ໃຫ້ຜູ້ນຶ່ງອ່ານ 2 ໂກຣິນໂທ 9:12-15. ຂຽນຫົວຂໍ້ທີສອງໃສ່ກະດານ ("2. ການຖວາຍຈະນໍາກຽດມາສູ່ພຣະເຈົ້າ, 9:12-15"). ພານັກຮຽນເບິ່ງພຣະພອນຂອງການຖວາຍຈາກພຣະທັມໃນຕອນນີ້. ໃຫ້ຜູ້ນຶ່ງແບ່ງປັນປະສົບການເຣື່ອງພຣະພອນຂອງການຖວາຍ.

## <u>ນໍາບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

8. ພານັກຮຽນສໍາຣວດເບິ່ງພຣະພອນຂອງການຖວາຍທີ່ບອກໄວ້ໃນພຣະທັມທີ່ຮຽນມາໃນມື້ນີ້ອີກເທື່ອນຶ່ງ. ຊັກຊວນແຕ່ລະຄົນໃຫ້ອະທິຖານຢ່າງງຽບໆ ເພື່ອຂອບພຣະຄຸນພຣະເຈົ້າສໍາລັບທຸກສິ່ງທີ່ພຣະອົງໄດ້ປະທານ ແລະສໍາລັບພຣະພອນທີ່ໄດ້ມາເພາະພວກເຂົາເຈົ້າໄດ້ຖວາຍໃຫ້ກັບພຣະອົງ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# ແກ້ໄຂຄວາມຂັດແຍ້ງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຂ ໂກຣິນໂທ 10
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ຂ ໂກຣິນໂທ 10
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການເບິ່ງຜູ້ອື່ນດ້ວຍດີ, ເວົ້າແຕ່ຄວາມຈິງ, ມີຫຍັງບໍ່ເຂົ້າໃຈກັນຄວນແກ້ໄຂຖາມເປັນເຄື່ອງບົ່ງບອກການເປັນຜູ້ໃຫຍ່ໃນພຣະເຢຊູຄຣິດ.
**ຄຳຖາມເພື່ອການສຳຣວດ:** ເຮົາຈະແກ້ໄຂຄວາມບໍ່ເປັນນໍ້າໜຶ່ງໃຈດຽວກັນຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຮົາຈະຮູ້ຈັກວິທີທາງແກ້ໄຂຄວາມຄິດຕ່າງກັນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸດທຸກຄົນເປັນສີພຣະຫັດພຣະເຈົ້າ.
- ຊ່ອຍຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

## ວິທີສອນ

1. ຕຽມຮູບຜູ້ນຶ່ງຕັ້ງຊື່ວ່າ ໂປໂລ, ຮູບກຸ່ມນ້ອຍກຸ່ມນຶ່ງຕັ້ງຊື່ວ່າພວກຕໍ່ຕ້ານໂປໂລ ແລະຮູບຄົນກຸ່ມໃຫຍ່ຕັ້ງຊື່ວ່າ ຄຣິສຕຽນເມືອງໂກຣິນໂທ. ເອົາຕິດໄວ້ຝາຫ້ອງ. (ອາດຈະເປັນຮູບແຕ້ມ ຫລືຮູບແທ້ກໍໄດ້ສຸດແລ້ວແຕ່ທ່ານຫາມາໄດ້ເພື່ອຕຽມອະທິບາຍ).

2. ເວົ້າເຣື່ອງບົດນຳກ່ອນບົດຮຽນໃຫ້ນັກຮຽນຟັງ ພະຍາຍາມອ່ານລ່ວງໜ້າໃຫ້ຈື່ເຣື່ອງກ່ອນສອນ. ແລ້ວອ້ອນວອນຂໍພຣະພອນໃນການສອນ.

3. ຂໍໃຫ້ຜູ້ນຶ່ງອ່ານ **ຂ ໂກຣິນໂທ 10: 1-6** ເປັນບົດຮຽນວັກທີ 1
   **ຄຳຊ່ອຍອະທິບາຍ:**
   1. ໂປໂລຕັ້ງຕົນເປັນແບບຢ່າງແກ່ຄຣິສຕະຈັກ ຜູ້ຮັບໃຊ້ທຸກຄົນສົມຄວນຮຽນເອົາແບບຢ່າງຂອງເພິ່ນ.
   2. ຢ່າຮຽນແບບຢ່າງຂອງກຸ່ມຕໍ່ສູ້
   3. ໂປໂລເລືອກເອົາອາວຸດ(ອ່ານເອເຟໂຊ 6:13) ອາວຸດຂອງຄຣິສຕຽນທຸກຄົນກໍແມ່ນຢ່າງດຽວກັນ.
4. ຂໍໃຫ້ຜູ້ນຶ່ງອ່ານ **ຂ ໂກຣິນໂທ 10: 7-11** ເປັນບົດຮຽນວັກທີ ຂ
   **ຄຳຊ່ອຍອະທິບາຍ:**

1. ໂປໂລບອກຄຣິສຕຽນໃນໂກຣິນໂທເບິ່ງຊີວິດການເປັນຢູ່ຂອງກຸ່ມຕໍ່ຕ້ານຈະຮູ້ໄດ້ວ່າໃຜເປັນຄຣິສຕຽນແທ້
2. ເຂົາກ່າວຫາໂປໂລບໍ່ໄປຢ້ຽມຢາມ ແລະອ່ອນແຮງ ຖ້ອຍຄຳສອນຂອງເພິ່ນໃຊ້ບໍ່ໄດ້ ດ້ວຍວ່າເຂົາຢາກຊັກຊວນຄົນທັງຫລາຍໃຫ້ເປັນຝ່າຍເຂົາເພື່ອຕໍ່ສູ້ໂປໂລ.
3. ໂປໂລບອກເຂົາອີກວ່າໄດ້ຂຽນມາແລ້ວຢ່າງໃດ ເມື່ອເພິ່ນມາກໍຈະເຮັດຕາມຈົດໝາຍ

5. ຂໍໃຫ້ຜູ້ນຶ່ງອ່ານ **2 ໂກຣິນໂທ 10: 12-18** ເປັນບົດຮຽນວັກທີ 3

**<u>ຄຳຊ່ອຍອະທິບາຍ:</u>**

1. ໂປໂລບອກວ່າ ເພິ່ນບໍ່ແມ່ນຄົນຍ້ອງຕົວເອງ, ສ່ວນກຸ່ມຕໍ່ຕ້ານນັ້ນຍ້ອງຕົວເອງ.
2. ການອວດຂອງໂປໂລແມ່ນຢູ່ໃນຂອບເຂດຄວາມເຊື່ອແລະການປະຕິບັດຂອງເພິ່ນ.
3. ໂປໂລນຳຂ່າວປະເສີດມາຍັງໂກຣິນໂທ ເມື່ອໝາກຜົນດີຜູ້ອື່ນກໍຢາກເກັບກ່ຽວ.
4. ໂປໂລບອກວ່າ ຖ້າຜູ້ໃດຢາກອວດຈົ່ງອວດພຣະຜູ້ເປັນເຈົ້າ ຢ່າອວດຕົນເອງ.

<u>ຄຳຖາມ</u>

1. ບົດຮຽນວັນນີ້ມີປະໂຍດຫຍັງສຳລັບທ່ານບໍ່? ມີຫຍັງແດ່?

2. ເຮົາຈະຮຽນເຮັດຄືໂປໂລໄດ້ຢ່າງໃດ?

3. ຫາກເຮົາມີສິ່ງທີ່ຂັດໃຈໃນໂບດເຮົາຄວນຈະເຮັດແນວໃດໃນມື້ນີ້?

4. ພຣະວິນຍານບໍຣິສຸດຊົງຢາກໃຫ້ທ່ານເຮັດແນວໃດກັບການຂັດແຍ່ງ Conflict ທີ່ທ່ານມີ?

5. ຫາກມີຄົນຕໍ່ສູ້ທ່ານຄືໂປໂລ ທ່ານຈະເຮັດແນວໃດໃນວັນນີ້?

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# ພຣະຄຸນອັນສົມບູນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໒ ໂກຣິນໂທ 12:1-10
**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ໒ ໂກຣິນໂທ 11:1--12:13
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າກຳລັງທີ່ເຮົາມີມາຈາກເບື້ອງເທິງ.
**ຄຳຖາມເພື່ອການສຳຣວດ:** ເຮົາມີກຳລັງອັນໃດຫລາຍກວ່າໝູ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຮົາສລູບສິ່ງທີ່ໂປໂລບອກວ່າເຮົາບໍ່ມີກຳລັງໂດຍຕົວເຮົາເອງ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸດທຸກຄົນເປັນສິພຣະທັດພຣະເຈົ້າ.
- ຊ່ອຍຈັດຕຣຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

## ວິທີສອນ

1. ຂຽນຄຳວ່າ **ບັດເຊີນ** ໃສ່ກະດານ, ແລ້ວຖາມນັກຮຽນວ່າມີຫຍັງແດ່ທີ່ເຮົາເຄີຍເຮັດບັດເຊີນ.
    ກ. ຂຽນຄຳຕອບນັກຮຽນລົງກ້ອງຄຳວ່າບັດເຊີນ.
    ຂ. ມີຫຍັງແດ່ທີ່ບໍ່ຢາກເຊີນ ຫລືບໍ່ຢາກໃຫ້ຜູ້ອື່ນຮູ້?
    ຄ. ເປັນຫຍັງຈຶ່ງຢາກປະກາດ ແລະບໍ່ປະກາດ?

໒. ເວົ້າເຣື່ອງໂປໂລໃນບົດ 11 ໃຫ້ນັກຮຽນຟັງ. ເພິ່ນປິດບັງເຣື່ອງນີ້ມາຕລອດຈົນເຖິງວັນນີ້.

3. ຂໍໃຫ້ຜູ້ນຶ່ງອ່ານ ໒ໂກຣິນໂທ 12:1-4 (**ນິມິດພິເສດ**) ເປັນບົດຮຽນອັກທີ 1
    ກ. ໂປໂລເວົ້າເຖິງຕົວເພິ່ນເອງ.
    ຂ. ສາສນາສາດລາງຄົນສັນນິຖານວ່າເພິ່ນເວົ້າເຖິງຕອນເພິ່ນຖືກຄວ່າງແລະເຂົາຄຶດວ່າເພິ່ນຕາຍແລ້ວຈຶ່ງລາກໄປຖິ້ມນອກເມືອງ.
    ຄ. ອີກຄຳເຫັນນຶ່ງຈາກ ມັດທິວ ເຮັນຣີ ມີຄຳເຫັນວ່າ ແມ່ນເພິ່ນເວົ້າເຖິງຕອນເພິ່ນຕົກຈາກຫລັງມ້າ.
    ງ. ສວັນຊັ້ນທີສາມນັ້ນເປັນເໝືອນ Paradise ສວນອຸທະຍານ ຄ້າຍຄືສວນເອເດນທີ່ອາດາມແລະເອວາເຄີຍຢູ່.

4. ຂໍໃຫ້ຜູ້ນຶ່ງອ່ານ 2ໂກຣິນໂທ 12:5-5 (**ບໍ່ຢາກອວດ**) ເປັນບົດຮຽນວັກທີ 2

   ກ. ເພິ່ນອວດແດ່ໂດຍອ້າງວ່າເປັນຜູ້ອື່ນ.

   ຂ. ຫາກເພິ່ນອວດເພິ່ນກໍຈະອວດຄວາມຈິງ.

   ຄ. ບົດຮຽນສອນເຮົາບໍ່ໃຫ້ອວດຄຸຍໂມ້ແມວບໍ່ມີຄວາມຈິງ.

5. ຂໍໃຫ້ຜູ້ນຶ່ງອ່ານ 2ໂກຣິນໂທ 12:7-10 (**ພໍໃຈໃນພຣະຄຸນ**) ເປັນບົດຮຽນວັກທີ 3

   ກ. ສ້ຽນໜາມຂອງຮ່າງກາຍແມ່ນບັນຫາຕ່າງໆ

   ຂ. ພຣະເຈົ້າຊົງບັນດານໃຫ້ມີສ້ຽນໜາມເພື່ອເພິ່ນຈະບໍ່ອວດ.

   ຄ. ສ້ຽນໜາມແມ່ນບໍຣິວານຂອງຊາຕານ.

   ງ. ເພິ່ນອ້ອນວອນຂໍບໍ່ມີສ້ຽນໜາມ ແຕ່ພຣະເຈົ້າຊົງອະນຸຍາດໃຫ້ມີຕໍ່ໄປ ເພື່ອເພິ່ນຈະເຂັ້ມແຂງໂດຍ
   ຕັ້ງຢູ່ໃນພຣະຄຸນ ແລະເພິ່ນຈະອ້ອນວອນຢູ່ບໍ່ຂາດ

   ຈ. ເພື່ອເຫັນແກ່ພຣະຄຸນຂອງພຣະເຢຊູຄຣິດ ໂປໂລຍອມທຸກຢ່າງ?

<u>ຄໍາຖາມ:</u>

1. ເຣື່ອງການຖ່ອມຕົວຂອງໂປໂລໄດ້ສອນຫຍັງເຮົາແດ່?

2. ເປັນຫຍັງພຣະເຈົ້າຈຶ່ງໃຫ້ມີສ້ຽນໜາມຂອງຮ່າງກາຍ?

3. ສ້ຽນໜາມຂອງຮ່າງກາຍໝາຍເຖິງຫຍັງ?

4. ເປັນຫຍັງໂປໂລຈຶ່ງຍອມອົດທົນຕໍ່ສ້ຽນໜາມ?

5. ເຮົາຈະເຮັດຄືໂປໂລໄດ້ແນວໃດ?

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ຊັກຊວນໃຫ້ກັບໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 12:14--13:14

**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** 2 ໂກຣິນໂທ 12:14--13:14

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອຊັກຊວນໃຫ້ກັບໃຈໂດຍໃຊ້ຄວາມຮັກແລະຮູ້ເຣື່ອງພຣະເຈົ້າເປັນຫລັກ.

**ຄຳຖາມເພື່ອການສຳຣວດ:** ເຮົາຈະຊັກຊວນຄົນຫລົງຫາຍໃຫ້ກັບໃຈໄດ້ຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮຽນເອົາແບບຢ່າງຂອງໂປໂລໃນການຊັກຊວນ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸດທຸກຄົນເປັນສີພຣະຫັດພຣະເຈົ້າ.
- ຊ່ອຍຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

## ວິທີສອນ

1. ຂຽນຫລືພິມຄຳຖາມນີ້ໃສ່ເຈັ້ຽແລ້ວແຈກຢາຍນັກຮຽນ, ໃຫ້ເວລານັກຮຽນຈັກສາມນາທີຕອບດ້ວຍຕົນເອງ (ຖ້າບໍ່ມີເຄື່ອງພິມໃຫ້ຂຽນລົງກະດານທຸກຂໍ້ກ່ອນນັກຮຽນມາຮອດແລ້ວຕອບເທື່ອລະຄົນ)

   ກ. ຄຣິສຕຽນນ້ຳເບີນີ່ງຈະຕ້ອງປ່ຽນແປງຈິດໃຈຄົນໄດ້ເກັ່ງ. ຖືກ( ) ຜິດ( )

   ຂ. ເຮົາບໍ່ສາມາດປ່ຽນແປງໃຈຄົນໄດ້. ຖືກ( ) ຜິດ( )

   ຄ. ພຣະເຢຊູບັງຄັບໃຫ້ຄົນເຊື່ອໃນພຣະອົງ. ຖືກ( ) ຜິດ( )

   ງ. ຄົນສ່ວນຫລາຍຕ້ອງເພິ່ງຜູ້ອື່ນໃນການປ່ຽນໃຈ. ຖືກ( ) ຜິດ( )

   ຈ. ໂປໂລມີໃຈປະສົງຢາກໃຫ້ຄົນບາບກັບໃຈ. ຖືກ( ) ຜິດ( )

   ສ. ເຮົາບໍ່ສາມາດປ່ຽນຄົນໄດ້ ແຕ່ສາມາດເລົ້າໂລມໃຈ. ຖືກ( ) ຜິດ( )

2. ຫລັງຈາກປະມານສາມນາທີແລ້ວໃຫ້ຄຣູສເລີຍຄຳຕອບ ຖືກຫລືຜິດຕາມຂ້າງເທິງນັ້ນ.

   ກ. ຜິດ. ດ້ວຍວ່າເຮົາບໍ່ມີອຳນາດໃຫ້ຄົນປ່ຽນໃຈໄດ້.

   ຂ. ຖືກ. ເຮົາບໍ່ສາມາດເຮັດໃຫ້ຄົນເຊື່ອພຣະເຈົ້າໄດ້ ໜ້າທີ່ເຮົາຄືປະກາດເທົ່ານັ້ນ.

   ຄ. ຜິດ. ພຣະເຢຊູບໍ່ເຄີຽບັງຄັບໃຫ້ໃຜເຊື່ອ ເພິ່ນພຽງແຕ່ເອີ້ນໃຫ້ມາເຊື່ອເທົ່ານັ້ນ.

ງ. **ຜິດ**. ຄົນທີ່ຈະປ່ຽນໃຈຈະບໍ່ເພິ່ງຜູ້ອື່ນໃນການປ່ຽນໃຈ ແຕ່ແມ່ນຕົວລາວເອງ.

ຈ. **ຖືກ**. ໂປໂລມີໃຈປະສົງໃຫ້ຄົນບາບກັບໃຈ ແຕ່ບໍ່ໄດ້ບັງຄັບ.

ສ. **ຖືກ**. ເຮົາບໍ່ມີອຳນາດບັງຄັບຈິດໃຈຄົນໄດ້ ສິ່ງທີ່ເຮັດໄດ້ຄືເລົ້າໂລມໃຈ.

3. ແບ່ງນັກຮຽນເປັນສາມຈຸແຕ່ລະຈຸໃຫ້ເລືອກຫົວໜ້າຂອງຈຸແລະໃຫ້ຄົ້ນຄວ້າດັ່ງນີ້:
    - ກ. ຈຸທີນຶ່ງອ່ານແລະຄົ້ນຄວ້າ **12:14-18** ຄຣູຂຽນຫົວເຣື່ອງທີ1 ໃສ່ກະດານ **ອະທິບາຍດ້ວຍຄວາມໝັ້ນໃຈ.**
    - ຂ. ຈຸທີສອງອ່ານແລະຄົ້ນຄວ້າ **12:19-21** ຄຣູຂຽນຫົວເຣື່ອງທີ 2 **ຫວັງວ່າຈະເກີດຜົນ.**
    - ຄ. ຈຸທີສາມໃຫ້ອ່ານແລະຄົ້ນຄວ້າ **13:1-14** ຄຣູຂຽນຫົວເຣື່ອງທີ 3 **ຊັກຊວນບໍ່ແມ່ນງ່າຍໆ.**

4. ຫລັງຈາກໃຊ້ເວລາຊົ່ວຄາວຄົ້ນຄວ້າແລ້ວໃຫ້ຫົວໜ້າລາຍງານຕາງໜ້າຈຸ, ດັ່ງນັ້ນຄຳເຫັນຂອງຄົນໃນຈຸຈະຕ້ອງບອກຫົວໜ້າຈົດໄວ້ເພື່ອລາຍງານແດ່ຜູ້ຄຣູ. ຄຳເຫັນຂອງແຕ່ລະຈຸໃຫ້ຄຣູຂຽນລົງກ້ອງຂອງຫົວເຣື່ອງຂອງຈຸນັ້ນ.

5. ຫາກຍັງມີບ່ອນໃດທີ່ຫົວໜ້າແຕ່ລະຈຸລາຍງານຍັງບໍ່ທັນຄົບ ຄຣູຄວນຂຽນລົງເພີ້ມໂດຍອີງໃສ່ບົດຮຽນ.

6. ຫລັງຈາກອະທິບາຍບົດຮຽນຈົບແລ້ວ ກ່າວຄຳຂອບໃຈແລະຍົກຍ້ອງວ່າ ທຸກຄົນຄົ້ນຄ້ວາໄດ້ດີຫລາຍ.

7. ໃຊ້ຄຳຖາມໃນຕອນທ້າຍຂອງບົດຮຽນຖາມນັກຮຽນແຕ່ລະຂໍ້ ໂດຍໃຫ້ເວລານັກຮຽນໄດ້ຄຶດ.

8. ອ້ອນວອນຂອບພຣະຄຸນພຣະເຈົ້າແລະຂໍໃຫ້ເຮົາເອົາບົດຮຽນວັນນີ້ເຂົ້າໃນຊີວິດເຮົາ.